# ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ໃນພາກພື້ນອາຊີຕາເວັນ ອອກສຽງໃຕ້ ສໍາຫຼັບ ສປປ ລາວ

## ກອບການຄຸ້ມຄອງຊົນເຜົ່າ

ກະກຽມ ໂດຍ:
**ກົມໂຍທາທິການທາງນໍ້າ**
ກະຊວງໂຍທາທິການ ແລະ ຂົນສົ່ງ
ຖະໜົນ ລ້ານຊ້າງ
ນະຄອນຫຼວງວຽງຈັນ, ສປປ ລາວ

**ເມສາ 2017**
ສະບັບທີ 5

# ສາລະບານ


ຕາຕະລາງ.......................................................................................... ii

ແຜນວາດ.......................................................................................... ii

ຄຳຫຍໍ້............................................................................................iii

ຄຳຂອບໃຈ.........................................................................................v

1.0 ຄຳນຳ.........................................................................................1

1.1 ວັດຖຸປະສົງຂອງການພັດທະນາໂຄງການ ແລະ ບັນດາອົງປະກອບຕ່າງໆ .........................1

1.2 ບັນດາອົງປະກອບຕ່າງໆ ..........................................................................1

1.3 ບັນດານະໂຍບາຍທີ່ນຳໃຊ້ ຂອງທະນາຄານໂລກ ................................................3

2.0 ກອບນິຕິກຳ ແລະ ລະບຽບການ ທີ່ກ່ຽວຂ້ອງກັບ ກຸ່ມຊົນເຜົ່າ ...........................................4

2.1 ກອບນິຕິກຳທີ່ກ່ຽວຂ້ອງກັບ ກຸ່ມຊົນເຜົ່າ.......................................................4

2.1.1 ລັດຖະທຳມະນູນ ຂອງ ສປປ ລາວ (2015)..........................................4

2.1.2 ນະໂຍບາຍຂອງຊົນເຜົ່າກຸ່ມນ້ອຍ )1992)..............................................4

2.1.3 ແຜນພັດທະນາ ເສດຖະກິດ8 ສັງຄົມແຫ່ງຊາດ ຄັ້ງທີ- (2016 - 2020)...........5

2.1.4 ກົດໝາຍທີ່ດິນ (2013).....................................................................5

2.1.5 ບັນດາເຄື່ອງມືສາກົນທີ່ກ່ຽວຂ້ອງ..........................................................7

3.0 ກຸ່ມຊົນເຜົ່າທີ່ຢູ່ໃນພື້ນທີ່ໂຄງການ .............................................................8

4.0 ຜົນກະທົບຈາກໂຄງການ ທີ່ຄາດວ່າຈະເກີດຂຶ້ນກັບຊົນເຜົ່າ .......................................9

5.0 ການກະກຽມການດຳເນີນການສຳຫຼັບກອບການມີສ່ວນຮ່ວມຂອງຊົນເຜົ່າ ...............................10

5.1 ການກັ່ນຕອງຕົວແທນຂອງກຸ່ມຊົນເຜົ່າ ...........................................................10

5.2 ການປະເມີນຜົນກະທົບທາງສັງຄົມ .................................................................10

5.3 ການປຶກສາຫາລືແບບອິດສະຫຼະ, ກ່ອນ ແລະ ໄດ້ຮັບຂໍ້ມູນ........................................12

5.4 ການກະກຽມແຜນພັດທະນາຊົນເຜົ່າ ...............................................................13

6.0 ການຈັດຕັ້ງອົງກອນ ...........................................................................14

7.0 ການຕິດຕາມກວດກາ ແລະ ປະເມີນຜົນ ...........................................................17

8.0 ກົນໄກການແກ້ໄຂຄຳຮ້ອງຮຽນ.......................................................................19

9.0 ການເຜີຍແຜ່ໃຫ້ກັບກຸ່ມຊົນເຜົ່າ ເພື່ອກະກຽມພາຍໃຕ້ກອບການມີສ່ວນຮ່ວມຂອງຊົນເຜົ່າ................22

10.0 ງົບປະມານ ...................................................................................22

# ຕາຕະລາງ


ຕາະລາງ 1 ສິນທິສັນຍາ ແລະ ອະນຸສັນຍາສາກົນ ໃນ ສປປ ລາວ. .......................................................7

ຕະຕະລາງ 2 ບັນດາຊົນເຜົ່າ ໃນ ບ້ານ ນາເລົາ, ເມືອງ ອຸດົມໄຊ, ແຂວງ ອຸດົມໄຊ, 2016 ...............................8

ຕາຕະລາງ 3 ໜ້າທີ່ຮັບຜິດຊອບຫຼັກ ສຳຫຼັບ ການຈັດຕັ້ງປະຕິບັດ ກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ. . . 15

ຕາຕະລາງ 4 ລາຍການງົບປະມານ ເພື່ອຈັດຕັ້ງປະຕິບັດກອບການຄຸ້ມຄອງຊົນເຜົ່າ ແລະ ບັນດາໂຄງການຍ່ອຍຕ່າງໆທີ່ກ່ຽວຂ້ອງ. ....................................................................................22


# ແຜນວາດ


ແຜນວາດ 1 ຂະບວນການຮັບ ແລະ ແກ້ໄຂຄຳຮ້ອງ ຂອງປະຊາຊົນ )GRM) ..........................................21

# ຄຳຫຍໍ້

| | |
|---|---|
| **ADRIF** | ແຜນດຳເນີນງານໃນການຈັດສັນຍົກຍ້າຍ ໂດຍຫຍໍ້ |
| **ARAP** | ແຜນຈັດສັນຍົກຍ້າຍໂດຍຫຍໍ້ |
| **CBO** | ອົງການຈັດຕັ້ງທີ່ມີຊຸມຊົນເປັນຖານ |
| **CSO** | ອົງການຈັດຕັ້ງທາງສັງຄົມ |
| **DDMCC** | ກົມຄຸ້ມຄອງໄພພິບັດແລະ ການປ່ຽນແປງດິນຟ້າອາກາດ |
| **DIA** | ອົງກອນທີ່ຖືກມອບໝາຍໃນການຈັດຕັ້ງປະຕິບັດ |
| **DMH** | ກົມອຸຕຸນິຍົມ ແລະ ອຸທົບກະສາດ |
| **DoPC** | ກົມແຜນການ ແລະ ການ ຮ່ວມມື |
| **DoR** | ກົມຂົວທາງ |
| **DOW** | ກົມໂຍທາທິການທາງນໍ້າ |
| **DPWT** | ພະແນກໂຍທາທິການ ແລະ ຂົນສົ່ງ |
| **DRM** | ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ |
| **DRR** | ການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ |
| **ECoP** | ຫລັກການປະຕິບັດດ້ານສິ່ງແວດລ້ອມ |
| **EGEF** | ກອບການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ |
| **EGDP** | ແຜນພັດທະນາກຸ່ມຊົນເຜົ່າ |
| **EMO** | ອົງການຊົນເຜົ່າສ່ວນໜ້ອຍ |
| **ESIA** | ການປະເມີນຜົນກະທົບດ້ານສິ່ງງແວດລ້ອມ ແລະ ສັງຄົມ |
| **ESMF** | ກອບຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| **ESMP** | ແຜນຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| **GoL** | ລັດຖະບານ ສປປ ລາວ |
| **GRC** | ຄະນະກຳມາການ ແກ້ໄຂຂໍ້ຮ້ອງຮຽນ |
| **IDA** | ອົງກອນການພັດທະນາສາກົນ |
| **MOF** | ກະຊວງການເງິນ |
| **MoICT** | ກະຊວງຖະແຫລງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ |
| **MONRE** | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| **MPI** | ກະຊວງແຜນການ ແລະ ການລົງທຶນ |
| **MPWT** | ກະຊວງໂຍທາທິການ ແລະ ຂົນສົ່ງ |
| **NSEDP** | ແຜນພັດທະນາເສດຖະກິດສັງຄົມ ແຫ່ງຊາດ |
| **OP/BP** | ນະໂຍບາຍດຳເນີນງານຂອງທະນາຄານໂລກ |

| | |
|---|---|
| **PAH** | ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ |
| **PAP** | ບຸກຄົນທີ່ຖືກຜົນກະທົບຈາກໂຄງການ |
| PDO | ເປົ້າໝາຍພັດທະນາໂຄງການ |
| **PDoNRE** | ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ |
| **PDR** | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ |
| **PIU** | ໜ່ວຍງານຈັດຕັ້ງປະຕິບັດໂຄງການ |
| **PMU** | ໜ່ວຍງານຄຸ້ມຄອງໂຄງການ |
| **RPF** | ກອບນະໂຍບາຍດ້ານການຈັດສັນຍົກຍ້າຍ |
| **SEA DRM** | ການຄຸ້ມຄອງຄວາມສ່ຽງຈາກໄພພິບັດໃນພາກອາຊີຕາເວັນອອກສ່ຽງໃຕ້ |
| **SIA** | ການປະເມີນຜົນກະທົບດ້ານສັງຄົມ |
| **SMMP** | ແຜນຄຸ້ມຄອງ ແລະ ຕິດຕາມກວດກາດ້ານສັງຄົມ |
| **USAID** | ອົງການຂອງສະຫະລັດອາເມລິກາ ເພື່ອການພັດທະນາສາກົນ |
| **WB** | ທະນາຄານໂລກ |
| **WBG** | ກຸ່ມທະນາຄານໂລກ |

# ຄຳຂອບໃຈ

ບົດລາຍງານ ກອບການປ້ອງກັນ ສະບັບນີ້ ໄດ້ຖືກພັດທະນາຂຶ້ນ ເພື່ອສະໜັບສະໜູນ ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ (SEA DRM) ທີ່ໄດ້ຮັບທຶນກູ້ຢືມຈາກ ກຸ່ມທະນາຄານໂລກ (WBG) ໂດຍຜ່ານກອງທຶນພັດທະນາສາກົນ (IDA) ໃຫ້ແກ່ ສາມ ປະເທດ ທີ່ຢູ່ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ຄື ສປປ ລາວ, ລາຊາອານາຈັກກຳປູເຈຍ ແລະ ສະຫະພາບມຽນມ້າ. ບົດລາຍງານ ສະບັບນີ້ ຮ່າງຂຶ້ນ ໂດຍ ກົມ ໂຍທາທິການທາງນ້ຳ (DoW) ຂອງ ສປປ ລາວ ປະກອບດ້ວຍ ທ່ານ ຄຳແສງ ອາລີ (ຮອງຫົວໜ້າພະແນກ ພະແນກປ້ອງກັນຕາຝັ່ງ ແລະ ນ້ຳຖ້ວມ), ແລະ ທ່ານ ພົມມະສອນ ແສງສຸລິຍະວົງ (ວິຊາການ) ພາຍໃຕ້ການຊີ້ນຳຂອງ ທ່ານ ຮຸ່ງຫຼ້າ ແສງເມືອງ (ຫົວໜ້າກົມ ໂຍທາທິການທາງນ້ຳ) ແລະ ຮ່ວມກັບ ວິຊາການຂອງ ບໍລິສັດທີ່ປຶກສາ ເຮັດເຟລ໌ດ ແມ່ຂອງ ເຊິ່ງປະກອບດ້ວຍ ທ່ານ ຈິມ ຣາມິນຕັນ, ທ່ານ ຈິມ ເວັບ, ທ່ານ ວົງເພັດ ສຸຂະວົງສາ, ທ່ານ ອານັນ ໄຊຍະວົງ ແລະ ທ່ານນາງ ດາຣິນ ແຮັນເດີສັນ.

ຂໍຂອບໃຈມາຍັງ ກຸ່ມທະນາຄານໂລກ ທີ່ໃຫ້ການສະໜັບສະໜູນ ໂດຍສະເພາະແມ່ນ ດຣ. ເຮັນຣິເກ້ ເບຣທ (ຫົວໜ້າທີມງານ), ທ່ານ ສີບຸນເຮືອງ ພະນະນຸວົງ (ຊ່ຽວຊານ ທາງດ້ານການປ້ອງກັນ ທາງສັງຄົມ) ແລະ ທ່ານ ພິເຕີ ຄາວຟອດ (ຊ່ຽວຊານ ທາງດ້ານການປ້ອງກັນ ທາງສິ່ງແວດລ້ອມ). ຂໍຂອບໃຈ ມາຍັງບັນດາໜ່ວຍງານລັດຖະບານ ເປັນຕົ້ນແມ່ນ ທ່ານຮອງເຈົ້າເມືອງ ເມືອງໄຊ ເທດສະບານແຂວງອຸດົມໄຊ ທີ່ສະຫຼະເວລາອັນມີຄ່າ ເຂົ້າຮ່ວມການປຶກສາຫາລື ແລະ ບັນດາຕົວແທນ ຈາກບ້ານນາສາວ ແລະ ນາເລົ່າ ທີ່ໃຫ້ການຮ່ວມມື ໃນການສະແດງຄຳຄະດເຫັນ ແລະ ສະເໜີແນະ ກ່ຽວກັບຜົນກະທົບທີ່ອາດຈະເກີດຂຶ້ນຈາກການກໍ່ສ້າງໂຄງການ.

# 1.0 ຄຳນຳ

ເອກະສານສະບັບນີ້ ແມ່ນກອບການມີສ່ວນຮ່ວມຂອງຊົນເຜົ່າ ສຳຫຼັບສະເໜີ ໂຄງການ ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ໃນອາຊີຕາເວັນອອກສຽງໃຕ້ (SEA DRM) ໄດ້ກະກຽມຮ່ວມກັບ ກະຊວງໂຍທາທິການ ແລະ ຂົນສົ່ງ ໂດຍຜ່ານ ກົມໂຍທາທິການທາງນໍ້າ ທີ່ໄດ້ຮັບທຶນກູ້ຢືມ ຈາກທະນາຄານໂລກ. ກອບການມີສ່ວນຮ່ວມຂອງຊົນເຜົ່າ ໄດ້ໃຫ້ຄຳແນະນຳຂັ້ນຕອນ ການມີສ່ວນຮ່ວມຂອງປະຊາຊົນ ຜູ້ທີ່ຄາດວ່າຈະໄດ້ຮັບຜົນກະທົບປະກອບດ້ວຍ ສື່ມວນຊົນທົ່ວໄປ, ຊົນເຜົ່າ ແລະ ຂະບວນການເສລີພາບ, ກ່ອນ ແລະ ກຳນົດ ການປຶກສາຫາລື, ໃນການພັດທະນາ ແລະ ການຈັດຕັ້ງປະຕິບັດໂຄງການຍ່ອຍ ເພື່ອການໄດ້ຮັບທຶນພາຍໃຕ້ ໂຄງການ ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ໃນອາຊີຕາເວັນອອກສຽງໃຕ້.

## 1.1 ວັດຖຸປະສົງຂອງການພັດທະນາໂຄງການ ແລະ ບັນດາອົງປະກອບຕ່າງໆ

ກຸ່ມທະນາຄານໂລກ (WBG) ໄດ້ພິຈາລະນາ ງົບປະມານເພື່ອນຳໃຊ້ເຂົ້າ ໃນໂຄງການຄຸ້ມຄອງຄວາມສ່ຽງ ຈາກໄພພິບັດ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ (SEA DRM) ເປົ້າໝາຍເພື່ອຫຼຸດຜ່ອນຄວາມສ່ຽງ ທີ່ເກີດຈາກໄພນໍ້າຖ້ວມ ແລະ ສົ່ງເສີມທາງດ້ານງົບປະມານເຂົ້າໃນການຄຸ້ມຄອງຄວາມສ່ຽງ ທີ່ເກີດຈາກໄພພິບັດທາງທຳມະຊາດ ໃນພາກພື້ນແມ່ນໍ້າຂອງ ຕອນລຸ່ມ. ຈຸດປະສົງໃນການສະເໜີ ໂຄງການຄຸ້ມຄອງຄວາມສ່ຽງ ຈາກໄພພິບັດ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ຈະໄດ້ຮັບທຶນກູ້ຢືມຈາກ ກຸ່ມຂອງທະນາຄານໂລກ (WBG) ໂດຍຜ່ານກອງທຶນພັດທະນາສາກົນ (IDA) ຈະຈັດຕັ້ງປະຕິບັດໂຄງການໃນ ສາມປະເທດ ທີ່ຢູ່ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ຄື ສປປ ລາວ, ລາຊາອານາຈັກກຳປູເຈຍ ແລະ ສະຫະພາບມຽນມ້າ. ໂຄງການ ນີ້ຈະຊ່ວຍໃຫ້ບັນດາປະເທດທີ່ຕິດກັບແມ່ນໍ້າຂອງ ທີ່ໄດ້ກ່າວມາເບື້ອງຕົ້ນນັ້ນ ໃຫ້ບັນລຸ ແລະ ຂະຫຍາຍໝາກຜົນ ໃນ ສາມ ປະເດັນ ທີ່ສຳຄັນດັ່ງນີ້ ການລົງທຶນໃສ່ໃນວຽກງານຄຸ້ມຄອງໄພພິບັດນໍ້າຖ້ວມ, ການປະເມີນຄວາມສ່ຽງຈາກໄພພິບັດ ແລະ ທາງດ້ານການບໍລິຫານການເງິນ ແລະ ອົງປະກອບເພື່ອຮັບມືກັບເຫດການສຸກເສີນ ໂດຍການຈັດສັນງົບປະມານຊົ່ວຄາວເທົ່າກັບສູນ.

ວັດຖຸປະສົງໂດຍລວມຂອງໂຄງການ SEA DRM ຂອງ ສາມ ປະເທດ ແມ່ນ "ເພື່ອສົ່ງເສີມ ແລະ ຮ່ວມມື ໃນການຄຸ້ມຄອງຄວາມສ່ຽງຈາກໄພພິບັດທາງທຳມະຊາດ ໃນລະດັບພາກພື້ນ". ທັງ ສາມ ປະເທດ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ໄດ້ມີການພັດທະນາ ບັນດາໂຄງການຍ່ອຍ ເປັນຈຳນວນຫຼວງຫຼາຍ ເພື່ອໃຫ້ແທດເໝາະກັບວັດຖຸປະສົງຂອງໂຄງການ ທີ່ຈະຕ້ອງໄດ້ປະເມີນ ແລະ ພິຈາລະນາເລື່ອງການລະດົມທຶນຮອນ ໃນຕໍ່ໜ້າ.

ສະເພາະ ໃນ ສປປ ລາວ, ໂຄງການ DRM ໄດ້ມີຈຸດປະສົງການພັດທະນາໂຄງການ (PDO) ເພື່ອ "ຊ່ວຍຫຼຸດຜ່ອນຄວາມສ່ຽງຈາກໄພນໍ້າຖ້ວມ ແລະ ເຊື່ອມໂຍງທ່າແຮງໃນການລະດົມທຶນຮອນ ເຂົ້າໃນວຽກງານການຄຸ້ມຄອງໄພພິບັດ ໃນພາກພື້ນແມ່ນໍ້າຂອງ".

## 1.2 ບັນດາອົງປະກອບຕ່າງໆ

ໂຄງການ SEA DRM ສະເພາະ ໃນ ສປປ ລາວ ໃດ້ລວມມີ 5ອົງປະກອບ ດັ່ງນີ້:

*ອົງປະກອບ 1: ການຄຸ້ມຄອງຄວາມສ່ຽງ ຈາກໄພນໍ້າຖ້ວມ ໃນຕົວເມືອງ*

ອົງປະກອບນີ້ ລວມມີການອອກແບບການລົງທຶນທີ່ເປັນ ໂຄງສ້າງ ແລະ ບໍ່ມີໂຄງສ້າງ ເພື່ອເສີມສ້າງລະບົບຄວາມຍືດຍຸ່ນໃນການຮັບມືກັບໄພນໍ້າຖ້ວມ ພາຍໃນແຂວງອຸດົມໄຊ. ໂດຍສະເພາະ, ໃນເທດສະບານເມືອງ ເມືອງໄຊ ແລະ ຕົວເມືອງໃກ້ຄຽງ. ການລົງທຶນໃສ່ໂຄງລ່າງພື້ນຖານ ໃນການຄຸ້ມຄອງຄວາມສ່ຽງ ຈາກໄພນໍ້າຖ້ວມ ໃນຕົວເມືອງ ຈະໄດ້ຖືກສະເໜີຂຶ້ນ ໃນເທດສະບານເມືອງ ຂອງແຂວງອຸດົມໄຊ ແລະ ຕົວເມືອງໃກ້ຄຽງ ທີ່ລວມທັງ ການລົງທຶນໃສ່ ການກໍ່ສ້າງລະບົບກັນຕາຝັ່ງເຈື່ອນ , ຄັນຄູກັນນໍ້າ, ຄອງລະບາຍນໍ້າ, ປະຕູນໍ້າ, ຝາຍກັ້ນນໍ້າ ແລະ ສວນສາທາລະນະແຄມແມ່ນໍ້າ. ບັນດາໂຄງລ່າງດັ່ງກ່າວ ຈະຊ່ວຍປ້ອງກັນຕົວເມືອງ ຈາກໄພນໍ້າຖ້ວມ ທີ່ເກີດຂຶ້ນກະທັນຫັນ ໃນລະດູຝົນຂອງທຸກໆປີ. ໜ່ວຍງານທີ່ໄດ້ຮັບມອບໝາຍດຳເນີນໂຄງການ (DIA) ຂອງໂຄງການ ແມ່ນເປັນໜ້າທີ່ຮັບຜິດຊອບຂອງ ກົມໂຍທາທິການທາງນໍ້າ (DoW) ຢູ່ພາຍໃຕ້ ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT).

### *ອົງປະກອບ 2 : ການຄຸ້ມຄອງລະບົບ ອຸຕຸນິຍົມ ແລະ ອຸທົກກະສາດ ທີ່ທັນສະໄໝ ແລະ ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ*

ອົງປະກອບນີ້ ຈະປະກອບດ້ວຍ ການຈັດຫາທຶນຮອນ ສໍາລັບມາດຕະການສ້າງຄວາມອາດສາມາດ ໃນການເພີ່ມປະສິດທິພາບ ແລະ ການສ້າງຄວາມເຂັ້ມແຂງ ໃນການພະຍາກອນ, ການແຈ້ງເຕືອນ ແລະ ລະບົບການຄຸ້ມຄອງຄວາມສ່ຽງຈາກໄພພິບັດ (DRM) ພາຍໃນກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (MoNRE). ອົງປະກອບນີ້ ແບ່ງອອກເປັນ ສອງ ອົງປະກອບຍ່ອຍຄື: ກ) ການສ້າງຄວາມເຂັ້ມແຂງ ໃນການພະຍາກອນອາກາດ ແລະ ລະບົບການແຈ້ງເຕືອນ ຂອງກົມອຸຕຸນິຍົມ ແລະ ອຸທົກກະສາດ (DMH) ໃນການຄາດຄະເນນໍ້າຖ້ວມ ທີ່ມີປະສິດທິພາບ ແລະ ເສີມສ້າງລະບົບການແຈ້ງເຕືອນ; ແລະ ຂ) ການສ້າງຄວາມອາດສາມາດໃນການສົ່ງເສີມບັນດາກິດຈະກໍາຕ່າງໆ ໂດຍຜ່ານ DRM ພາຍໃນ ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ (DDMCC).

### *ອົງປະກອບ 3: ການສະໜອງທຶນໃນການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ແລະ ການຮັບປະກັນ*

ອົງປະກອບນີ້ ຈະປະກອບດ້ວຍ ການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ເພື່ອເພີ່ມຄວາມຍືດຍຸ່ນເຂົ້າໃນການລະດົມທຶນຮອນ ໃນ ສປປ ລາວ ຕໍ່ກັບບັນຫາທາງດ້ານຄວາມສ່ຽງ ຈາກໄພພິບັດທາງທໍາມະຊາດ ແລະ ການປ່ຽນແປງດິນຟ້າອາກາດ ແມ່ນໜ້າທີ່ຂອງລັດຖະບານ ສປປ ລາວ ໃນການສະໜອງທຶນຮອນທີ່ຈໍາເປັນ ເຂົ້າຊ່ວຍເຫຼືອຫຼັງເກີດໄພພິບັດ. ອົງປະກອບນີ້ ແບ່ງອອກເປັນ ສາມ ອົງປະກອບຍ່ອຍຄື: ກ) ການຊ່ວຍເຫຼືອທາງດ້ານວິຊາການ ໃນການຈັດຫາທຶນຮອນ ໃສ່ໃນວຽກງານການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ໃນລະດັບຊາດ ເພື່ອພັດທະນາຍຸດທະສາດການປ້ອງກັນ ທາງດ້ານການເງິນແຫ່ງຊາດ ທີ່ສາມາດປະສານສົມທົບກັບທຶນຮອນ ໃນການຄຸ້ມຄອງຄວາມສ່ຽງຈາກໄພພິບັດໃນພາກພື້ນ. ຍຸດທະສາດດັ່ງກ່າວ ຈະຕ້ອງສ້າງຂຶ້ນໂດຍລັດຖະບານ ສປປ ລາວ ແລະ ຈາກການສະໜັບສະໜູນຈາກທະນາຄານໂລກ ໃຫ້ແກ່ກະຊວງການເງິນ (MoF) ແລະ ກະຊວງແຜນການ ແລະ ການລົງທຶນ (MPI); ຂ) ການສ້າງຕັ້ງກອງທຶນປະກັນໄພທາງດ້ານໄພພິບັດໃນອາຊີ (ADRIF) ເພື່ອເປັນການສະໜັບສະໜູນກິດຈະກໍາຕ່າງໆ ທີ່ຖືກຈັດຂຶ້ນໂດຍກົນໄກການມີສ່ວນຮ່ວມໃນການຄຸ້ມຄອງໄພພິບັດໃນພາກພື້ນ; ແລະ ຄ) ທຶນຮອນຂອງລັດຖະບານບາງສ່ວນ ຈະຕ້ອງໄດ້ແບ່ງປັນໃຫ້ກັບ ADRIF.

### *ອົງປະກອບ 4: ການບໍລິຫານໂຄງການ*

ອົງປະກອບນີ້ ຈະຊ່ວຍສະໜັບສະໜູນໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການ, ຈະປະກອບດ້ວຍວິຊາການ ແລະ ພະນັກງານທີ່ສາມາດມອບໝາຍໜ້າທີ່ໃຫ້ໄດ້ ຜູ້ທີ່ຈະເຮັດໜ້າທີ່ໃນໜ່ວຍງານບໍລິຫານໂຄງການ (PMU) ຈາກໜ່ວຍງານທີ່ກ່ຽວຂ້ອງ. ອົງປະກອບ ບໍລິຫານໂຄງການ ຈະຊ່ວຍສະໜັບສະໜູນເລື່ອງງົບປະມານ ແລະ ສ້າງຄວາມອາດສາມາດ ໃນການພັດທະນາ ການຈັດຕັ້ງປະຕິບັດໂຄງການ ແລະ ຈັດວາງໜ້າທີ່ຂອງພະນັກງານ ທີ່ລວມທັງ ການຈັດຊື້ຈັດຈ້າງ, ການບໍລິຫານການເງິນ. ການຄຸ້ມຄອງບັນຫາການປ້ອງກັນ, ກວດສອບທັງພາຍໃນ ແລະ ພາຍນອກ ແລະ ສ້າງຕັ້ງໜ່ວຍງານ ຕິດຕາມກວດກາ, ປະເມີນຜົນ ແລະ ລາຍງານໂຄງການ.

### *ອົງປະກອບ 5 : ພາກສ່ວນຮັບມືກັບເຫດການສຸກເສີນ*

"ອົງປະກອບ ເທົ່າກັບສູນ" ນີ້ ຈະຊ່ວຍຈັດສັນງົບປະມານໄດ້ວ່ອງໄວ ໃຫ້ແທດເໝາະກັບຂະບວນການຟື້ນຟູສຸກເສີນ ແລະ ການບູລະນະສິ່ງປຸກສ້າງ ໃນກໍລະນີທີ່ມີການປະກາດວ່າ ມີໄພພິບັດເກີດຂຶ້ນ. ອົງປະກອບນີ້ ຈະເປັນການເບີກຈ່າຍ ເຂົ້າໃນບັນຊີທີ່ເປັນຜົນບວກຂອງອຸປະກອນ ແລະ/ຫຼື ວຽກສະເພາະ. ອຸປະກອນ, ການບໍລິການ ແລະ ມູນຄ່າຂອງການດໍາເນີນງານສຸກເສີນ ເພື່ອຟື້ນຟູສຸກເສີນ. ຄູ່ມືການດໍາເນີນງານ ເພື່ອຮັບມືກັບເຫດການສຸກເສີນ ຈະນໍາໃຊ້ຢູ່ໃນອົງປະກອບນີ້, ເຊິ່ງລາຍລະອຽດ ກ່ຽວກັບການຄຸ້ມຄອງການເງິນ, ການຈັດຊື້ຈັດຈ້າງ, ການປົກປ້ອງ ແລະ ໂຄງປະກອບການຈັດຕັ້ງປະຕິບັດອື່ນໆ ທີ່ສໍາຄັນ ເພື່ອຍື່ນສະເໜີ ແລະ ໄດ້ຖືກອະນຸມັດຈາກ ທະນາຄານໂລກ ກ່ອນທີ່ຈະມີການເບີກຈ່າຍ.

ຂອບເຂດການລົງທຶນເຫຼົ່ານີ້ ຈະໄດ້ຮັບການພິຈາລະນາໄຕ່ຕອງໃນຊ່ວງໄລຍະເວລາການກະກຽມໂຄງການ. ຫຼັກການໃນການເລືອກແມ່ນປະກອບມີດັ່ງນີ້: (ກ) ຂອບເຂດຂອງຜົນກະທົບ; (ຂ) ປະສິດທິພາບ ແລະ ຄວາມຍືນຍົງ; (ຄ) ຜົນກະທົບຕໍ່ກັບການຫຼຸດຜ່ອນຄວາມທຸກຍາກ; (ງ) ທ່າແຮງ/ມູນຄ່າເພີ່ມ; (ຈ) ຄວາມເປັນໄປໄດ້ (ດ້ານການເມືອງ, ງົບປະມານ, ການຈັດຕັ້ງປະຕິບັດ, ມາດຕະຖານ); (ສ) ຄວາມພ້ອມຂອງທີມງານ ແລະ (ຊ) ຜົນປະໂຫຍດຂອງທ້ອງຖິ່ນ

ບັນດາເອກະສານສໍາຄັນອື່ນໆ ຈະຖືກພັດທະນາຂຶ້ນມາສະເພາະ ໂຄງການ SEA DRM ໃນ ສປປ ລາວ ທີ່ລວມມີ ການປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມເບື້ອງຕົ້ນ (PESA), ກອບໜ້າວຽກ ການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF), ກອບການຄຸ້ມຄອງຊົນເຜົ່າ (EGEF) ແລະ ກອບນະໂຍບາຍການຈັດສັນຍົກຍ້າຍ (RPF). ບົດການປະເມີນຜົນ

ກະທົບສິ່ງແວດລ້ອມ ແລະ ສັງຄົມເບື້ອງຕົ້ນ ຂອງໂຄງການ SEA DRM ໃນ ສປປ ລາວ ສະບັບນີ້ ແມ່ນໄດ້ລວມເອົາ ອົງປະກອບທີ 1 ແລະ 2 ດັ່ງທີ່ໄດ້ກ່າວມາເບື້ອງຕົ້ນນັ້ນ. ສ່ວນອົງປະກອບອື່ນໆ ແມ່ນບໍ່ໄດ້ລວມຢູ່ໃນເອກະສານ ສະບັບນີ້ (ເຊັ່ນ ອົງປະກອບທີ 3 ແລະ 4) ຫຼື ຈະແຍກປະຕິບັດຢູ່ໃນສັນຍາສະບັບອື່ນ (ເຊັ່ນ ອົງປະກອບທີ 5).

## 1.3 ບັນດານະໂຍບາຍທີ່ນຳໃຊ້ ຂອງທະນາຄານໂລກ

ພາຍໃຕ້ໂຄງການ ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ໃນອາຊີຕາເວັນອອກສຽງໃຕ້, ພື້ນທີ່ສ່ຽງໄພຂອງ ສປປ ລາວ ຈະເປັນພື້ນທີ່ ທີ່ໃຫຍ່ທີ່ສຸດສຳຫຼັບການການລົງທຶນສະເພາະ. ລະດັບ ແລະ ຂະໜາດຂອງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈາກການຈັດຕັ້ງປະຕິບັດຂອງໂຄງການຍ່ອຍຂຶ້ນກັບທີ່ຕັ້ງ ແລະ ຂອບເຂດຂອງໂຄງການ. ການກໍ່ສ້າງສວນສາທາລະນະ ສອງຝາກແມ່ນ້ຳ ແລະ ມາດຕະການລິເລີ່ມການຫຼຸດຜ່ອນນ້ຳຖ້ວມຂອງໂຄງການຍ່ອຍ ເພື່ອດຳເນີນການພາຍໃຕ້ ພາກສ່ວນທີ່ 1 ອາດຈະພົວພັນເຖິງຜົນກະທົບດ້ານກຳມະສິດທີ່ດິນ ແລະ/ຫຼື ການຍົກຍ້າຍ ຂອງກຸ່ມຊົນເຜົ່າ (ລວມມີ ຂະມຸ, ໄທດຳ ແລະ ຜູ້ນ້ອຍ) ອີງຕາມການປຶກສາຫາລືໃນເບື້ອງຕົ້ນກັບຜູ້ໄດ້ຮັບ (ປະຊາຊົນ) ກ່ຽວກັບຄວາມເປັນໄປໄດ້ໃນການລົງທຶນ, ໂຄງການຈະປະຕິບັດຕາມນະໂຍບາຍຂອງທະນາຄານໂລກ: ຄົນຊົນເຜົ່າ (OP/BP 4.10) ແລະ ການຈັດສັນຍົກຍ້າຍແບບບໍ່ສະມັກໃຈ (OP/BP 4.12) ແລະ ຕາມ ຫ້າ ນະໂຍບາຍປ້ອງກັນ ຂອງທະນາຄານໂລກ: ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (OP/BP 4.01), ແຫຼ່ງທີ່ຢູ່ອາໄສທາງທຳມະຊາດ (OP/BP 4.04), ຊັບພະຍາກອນທາງດ້ານວັດທະນາທຳ (OP/BP 4.11), ແລະ ໂຄງການທາງນ້ຳສາກົນ (OP/BP 7.50).

ຕາມການສະເໜີກິດຈະກຳຂອງໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດຂອງ ສປປ ລາວ ອາດຈະລວມຢູ່ໃນການລິເລີ່ມໂຄງການຍ່ອຍ ທີ່ໄດ້ຈັດຕັ້ງປະຕິບັດ ຢູ່ໃນພື້ນທີ່ທີ່ກຸ່ມຊົນເຜົ່າອາໄສຢູ່ໃນປັດຈຸບັນ ແລະ ເນື່ອງຈາກວ່າບັນດາກິດຈະກຳຂອງໂຄງການລະດັບຊາດ (ຕົວຢ່າງ: ການປະຕິຮູບນະໂຍບາຍ, ການສ້າງຄວາມເຂັ້ມແຂງ ແລະ ຄວາມອາດສາມາດໃຫ້ແກ່ອົງກອນ) ອາດຈະມີຜົນກະທົບຕໍ່ກັບກຸ່ມຊົນເຜົ່າ, OP/BP 4.10 ມາດຖານນະໂຍບາຍທີ່ໃຊ້ກັບໂຄງການ. ລັດຖະບານແຫ່ງ ສປປ ລາວ ບໍ່ໄດ້ຈັດສະຖານະຂອງຊົນເຜົ່າພື້ນເມືອງ ແລະ ລັດຖະບານ ແຫ່ງ ສປປ ລາວ ບໍ່ໃຫ້ມີການແບ່ງແຍກຊົນຊາດຊົນເຜົ່າ ຄືໃຫ້ມີພຽງຊົນຊາດດຽວ ຄື ຊົນຊາດລາວ.

ກອບການມີສ່ວນຮ່ວມຂອງຊົນເຜົ່າໄດ້ມີຄູ່ມືແນະນຳ (OP/BP 4.10) ເພື່ອເປັນເຄື່ອງມືໃນການຕັດສິນໃຈ ກ່ອນຂັ້ນຕອນການກະກຽມໂຄງການ ເພື່ອຮັບປະກັນວ່າການພິຈາລະນາທີ່ສົມເຫດສົມຜົນ ໃນການປຶກສາຫາລື ແລະ ການມີສ່ວນຮ່ວມຂອງຊົນເຜົ່າ, ລວມທັງຊົນເຜົ່າກຸ່ມນ້ອຍ. ດັ່ງນັ້ນ, ລະດັບຂອງການປະເມີນຜົນທາງດ້ານສັງຄົມ ແມ່ນຂຶ້ນກັບ ສະພາບແວດລ້ອມ ແລະ ຂະໜາດ ຂອງການສະເໜີການລິເລີ່ມໂຄງການຍ່ອຍ ແລະ ຜົນກະທົບຕໍ່ກັບຊົນເຜົ່າ. ກອບການມີສ່ວນຮ່ວມຂອງຊົນເຜົ່າໄດ້ໃຫ້ທິດແນະນຳ ໃນການມີສ່ວນຮ່ວມຂອງຊົນເຜົ່າທີ່ໄດ້ຮັບຜົນກະທົບ ໃນຂະບວນການປຶກສາຫາລືແບບອິດສະຫຼະ, ກ່ອນ ແລະ ໄດ້ຮັບຂໍ້ມູນ ແລະ ໃນການພັດທະນາ ແລະ ການດຳເນີນການຂອງໂຄງການຍ່ອຍ ທີ່ໄດ້ຮັບທຶນພາຍໃຕ້ໂຄງການ ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ໃນອາຊີຕາເວັນອອກສຽງໃຕ້ ຂອງ ສປປ ລາວ.

ໃນຂະນະທີ່ແຜນການລົງທຶນທີ່ບໍ່ມີໂຄງສ້າງ (ພາຍໃຕ້ ອົງປະກອບຍ່ອຍ 1.2) ຈະກ່ຽວຂ້ອງກັບການໃຫ້ການຊ່ວຍເຫຼືອ ດ້ານເຕັກນິກ, ບາງແຜນງານ ຫຼື ບັນດາການສຶກສາ ໄດ້ຮັບການສະໜັບສະໜູນ ພາຍໃຕ້ອົງປະກອບ ນີ້ (ເຊັ່ນ ການວາງແຜນການນຳໃຊ້ທີ່ດິນ ຫຼື ການອອກແບບ ການລົງທຶນສີຂຽວ) ອາດນຳໄປສູ່ການປ່ຽນແປງ ການໃຊ້ປະໂຫຍດທີ່ດິນ ທີ່ອາດສົ່ງຜົນກະທົບ ຕໍ່ການດຳລົງຊີວິດ ຫຼື ສະພາບແວດລ້ອມ ຂອງ ຊຸມຊົນຊົນເຜົ່າ. ດັ່ງນັ້ນ ແຜນ ແລະ ບັນດາການສຶກສານີ້ ຈະປະເມີນຜົນກະທົບ ທີ່ອາດເກີດຂຶ້ນ ກັບ ຊຸມຊົນຊົນເຜົ່າ ແລະ ລວມທັງມາດຕະການທີ່ເໝາະສົມ ເພື່ອ ແກ້ໄຂ ບັນຫາຜົນກະທົບ ແລະ ຄວາມຊ່ຽງທີ່ອາດເກີດຂຶ້ນ (ແລະ ເພີ່ມຜົນປະໂຫຍດ ທີ່ເໝາະສົມ ທາງດ້ານວັດທະນາທຳ) ຕາມຄວາມຈຳເປັນ. ບັນດາ TORs ທີ່ກ່ຽວຂ້ອງສຳລັບບັນດາ ກິດຈະກຳນີ້ ຈະລວມທັງຂໍ້ກຳນົດທີ່ຜົນນຳໃຊ້ ໃນບັນດາສິ່ງເຫຼົ່ານີ້.

# 2.0 ກອບນິຕິກຳ ແລະ ລະບຽບການ ທີ່ກ່ຽວຂ້ອງກັບ ກຸ່ມຊົນເຜົ່າ

## 2.1 ກອບນິຕິກຳທີ່ກ່ຽວຂ້ອງກັບ ກຸ່ມຊົນເຜົ່າ

### 2.1.1 ລັດຖະທຳມະນູນ ຂອງ ສປປ ລາວ (2015)

ສປປ ລາວ ບໍ່ມີນິຕິກຳສະເພາະ ສຳຫຼັບກຸ່ມຊົນເຜົ່າ, ແຕ່ ລັດຖະທຳມະນູນສະບັບເກົ່າ ປີ 1991 ແລະ ສະບັບປັບປຸງໃໝ່ ໃນປັດຈຸບັນ ປີ 2015 (ພາກທີ ສີ, ມາດຕາ 34 – 51) ໄດ້ກຳນົດໄວ້ວ່າ ປະຊາຊົນລາວທຸກຄົນມີສິດ ແລະ ພັນທະທີ່ເທົ່າທຽມກັນ ໃນການພັດທະນາສ້າງສາປະເທດຊາດ. ລັດຖະທຳມະນູນ ໄດ້ກຳນົດວ່າ ສປປ ລາວ ເປັນລັດທີ່ມີຫຼາຍຊົນເຜົ່າ ແລະ ທຸກເຜົ່າມີສິດເທົ່າທຽມກັນ.

ມາດຕາ 8 ລະບຸໄວ້ວ່າ:

> *ລັດປະຕິບັດນະໂຍບາຍສາມັກຄີ ແລະ ສະເໝີພາບ ລະຫວ່າງຊົນເຜົ່າຕ່າງໆ. ທຸກຊົນເຜົ່າລ້ວນແຕ່ມີສິດປົກປັກຮັກສາ, ເສີມຂະຫຍາຍຮີດຄອງປະເພນີ ແລະ ວັດທະນາທຳອັນດີງາມຂອງຕົນ ແລະ ຂອງຊາດ. ຫ້າມທຸກການກະທຳທີ່ເປັນການ ແບ່ງແຍກ ແລະ ການປະພຶດ ທີ່ເປັນການຈຳແນກລະຫວ່າງຊົນເຜົ່າ. ລັດນຳໃຊ້ທຸກມາດຕະການ ເພື່ອພັນຂະຫຍາຍ ແລະ ຍົກລະດັບເສດຖະກິດ-ສັງຄົມ ຂອງທຸກຊົນເຜົ່າໃຫ້ສູງຂຶ້ນ.*

ມາດຕາ *13* ກ່າວໄວ້ວ່າ ລະບົບເສດຖະກິດຂອງປະເທດ ແມ່ນມີຈຸດປະສົງ ເພື່ອຍົກສູງລະດັບຊີວິດການເປັນຢູ່ ທັງທາງດ້ານວັດຖຸ ແລະ ຈິດໃຈ ຂອງປະຊາຊົນລາວບັນດາເຜົ່າ.

ມາດຕາ *19* ໄດ້ເນັ້ນຢ້ຳຄວາມສຳຄັນຂອງການສ້າງໂຮງຮຽນ ເພື່ອສະໜອງການສຶກສາໃຫ້ແກ່ທຸກຊົນເຜົ່າ, ໂດຍສະເພາະແມ່ນຊົນເຜົ່າໃນເຂດຊົນນະບົດ.

ມາດຕາ *35* ລະບຸໄວ້ວ່າ ພົນລະເມືອງລາວ ໂດຍບໍ່ຈຳແນກຍິງ-ຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

### 2.1.2 ນະໂຍບາຍຂອງຊົນເຜົ່າກຸ່ມນ້ອຍ (1992)

ມະຕິຕົກລົງຂອງກົມການເມືອງ ທີ່ກ່ຽວຂ້ອງກັບ ວຽກງານຊົນເຜົ່າ, ໂດຍສະເພາະ ແມ່ນຊົນເຜົ່າມົ້ງ (ນະໂຍບາຍຂອງ ຊົນເຜົ່າມົ້ງ ປີ 1981) ປັບປຸງໃນປີ 1981 ເປັນຖະແຫຼງການທຳອິດຂອງນະໂຍບາຍຊົນເຜົ່າ ນັບຕັ້ງແຕ່ສ້າງຕັ້ງເປັນ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໃນປີ 1975. ໃນນະໂບາຍດັ່ງກ່າວພະຍາຍາມປັບປຸງສະພາບການດຳລົງຊີວິດຂອງປະຊາຊົນເຜົ່າມົ້ງ, ແລະ ເພີ່ມຄວາມປອດໄພຂອງຊາດໃນຂອບເຂດທົ່ວປະເທດ. ໃນປີ 1992, ນະໂຍບາຍດັ່ງກ່າວໄດ້ຖືກປັບປຸງ ແລະ ພັດທະນາກາຍມະຕິຂອງຄະນະກຳມະການບໍລິຫານຂອງພັກ ກາຍເປັນນະໂຍບາຍເຜົ່າຊົນກຸ່ມນ້ອຍ ພາຍໃຕ້ຂໍ້ຕົກລົງຂອງ ວຽກງານຊົນເຜົ່າ. ໃນສະໄໝໃໝ່, ເຊິ່ງສາມາດນຳໃຊ້ໄດ້ກັບທຸກຊົນເຜົ່າ ພາຍໃນຂອບເຂດທົ່ວປະເທດ. ໃນນັ້ນບໍ່ມີມາດຕາທີ່ລະບຸສະເພາະສຳຫຼັບຊົນເຜົ່າ, ເປັນຄືດັ່ງມະຕິຕົກລົງບົນຫຼັກການທີ່ທຸກຊົນເຜົ່າ ຈະຕ້ອງໄດ້ຮັບການປັບປຸງການເຂົ້າເຖິງການບໍລິການດ້ານຕ່າງໆ ແລະ ຈະຕ້ອງລຶບລ້າງທຸກການແບ່ງແຍກ.

ນະໂຍບາຍທົ່ວໄປຂອງ ລັດຖະບານລາວ ທີ່ກ່ຽວຂ້ອງກັບກຸ່ມຊົນເຜົ່າ ໄດ້ຖືກອອກແບບເພື່ອ:

- ສ້າງຄວາມສຳນຶກເພື່ອຊາດ (ເອກະລັກປະຈຳຊາດ);
- ຄຳນຶງເຖິງຄວາມສະເໝີພາບລະວ່າງຊົນເຜົ່າ;
- ເພີ່ມທະວີຄວາມສາມັກຄີປອງດອງລະຫວ່າງກຸ່ມຊົນເຜົ່າໃນຖານະເປັນສະມາຊິກໃນຄອບຄົວໃຫຍ່ຂອງລາວ;
- ແກ້ໄຂບັນຫາແນວຄວາມຄິດທີ່ແຂງກະດ້າງ ແລະ ອາຄາດແຄ້ນ ແລະ ຄວາມບໍ່ເທົ່າທຽມທາງດ້ານເສດຖະກິດ ແລະ ວັດທະນະທຳ;
- ປັບປຸງເງື່ອນໄຂການດຳລົງຊີວິດ ຂອງກຸ່ມຊົນເຜົ່າ ເທື່ອລະກ້າວ

- ເສີມຂະຫຍາຍ ໃຫ້ກວ້າງໄກທີ່ສຸດເທົ່າທີ່ຈະເຮັດໄດ້ ໃນດ້ານມໍລະດົກອັນດີງາມ ແລະ ເອກະລັກ ຂອງແຕ່ລະກຸ່ມຊົນເຜົ່າ ແລະ ປະກອບສ່ວນ ເຂົ້າໃນວຽກງານການສ້າງສາພັດທະນາປະເທດຊາດ.

ນະໂຍບາຍຮຽກຮ້ອງໃຫ້ມີການປ້ອງກັນ ແລະ ກຳຈັດ ເຊື້ອພະຍາດ ເພື່ອໃຫ້ກຸ່ມຊົນເຜົ່າໄດ້ມີສຸຂະພາບທີ່ດີ ແລະ ມີອາຍຸຍືນຍາວ. ລັດຖະບານລາວ ໄດ້ຄາດຫວັງອະນຸຍາດການລົງທຶນທີ່ເໝາະສົມ ເພື່ອຂະຫຍາຍຕາໜ່າງດ້ານການເບິ່ງແຍງສຸຂະພາບ ໂດຍ ປະສົມປະສານຢາສະໄໝໃໝ່ ແລະ ຢາພື້ນເມືອງ.

ການເກັບກຳຂໍ້ມູນດ້ານຊົນເຜົ່າທີ່ເປັນພະນັກງານລັດ, ພະນັກງານຊົນເຜົ່າບຳນານ, ຄົນພິການ ແລະ ສະມາຊິກໃນຄອບຄົວທີ່ເສຍຊີວິດໃນກິດຈະກຳຕ່າງໆຈະຕ້ອງໄດ້ຮັບນະໂຍບາຍ.

ໄດ້ມີຄຳສັ່ງໃນການເຜີຍແຜ່ຂໍ້ມູນຂາວສານໃນພື້ນທີ່ຫ່າງໄກສອກຫຼີກ ໂດຍຜ່ານຫຼາຍວິທີການ ໂດຍສະເພາະ ແມ່ນລາຍການວິທະຍຸທີ່ຈັດເປັນພາສາຊົນເຜົ່າຕ່າງໆ, ມີແຜນແຜນການສົ່ງເສີມໃຫ້ຊຸ່ງວຊານ ຜູ້ທີ່ສາມາດເວົ້າພາສາຊົນເຜົ່າໄດ້ ແລະ ຜູ້ທີ່ມີຄວາມຮູ້ດ້ານ ວິທະຍາສາດ, ການຜະລິດ ແລະ ເສດຖະກິດ-ສັງຄົມ. ຄຳຖາມກໍ່ຄື ບຸກຄະລາກອນເຫຼົ່ານີ້ມີຢູ່ໃສ, ບໍ່ມີ.

ຄະນະກຳມະການຊົນເຜົ່າ ເຊິ່ງຢູ່ພາຍໃຕ້ສະພາແຫ່ງຊາດ ມີໜ້າທີ່ຮັບຜິດຊອບໃນການຮ່າງ ແລະ ປະເມີນ ກົດໝາຍທີ່ຍື່ນສະເໜີກ່ຽວກັບຊົນເຜົ່າ, ຂົນຂວາຍເພື່ອການຈັດຕັ້ງປະຕິບັດ ແລະ ການຈັດຕັ້ງປະຕິບັດຂອງແຜນພັດທະນາເສດຖະກິດ-ສັງຄົມ. ການຄົ້ນຄວ້າກ່ຽວກັບຊົນເຜົ່າ ແມ່ນໜ້າທີ່ຂອງ ສະຖາບັນເພື່ອການຄົ້ນຄວ້າວັດທະນະທຳ ເຊິ່ງຢູ່ພາຍໃຕ້ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (MoICT). ສະຖາບັນນຳທາງສຳຫຼັບວຽກງານຊົນເຜົ່າ ແມ່ນ ອົງການຈັດຕັ້ງມະຫາຊົນ (ທາງການເມືອງ), ແນວລາວສ້າງຊາດ, ເຊິ່ງມີພະແນກວຽກງານດ້ານຊົນເຜົ່າ.

### 2.1.3 ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 (2016 - 2020)

ຈຸດປະສົງໂດຍລວມ ຂອງ ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ 8 (NSEDP) ເພື່ອຮັບປະກັນ ໃຫ້ ສປປ ລາວ ຫຼຸດພົ້ນອອກຈາກ ສະຖານະປະເທດທີ່ດ້ອຍພັດທະນາ (LDC). ພ້ອມກັບໄດ້ກຳນົດ ສາມ ຜົນຮັບ ແລະ ແຕ່ລະຢ່າງໄດ້ກຳນົດເປົ້າໝາຍການປະຕິບັດງານ.

ໃນຖານະເປັນຍຸດທະສາດການພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ໜຶ່ງໃນນັ້ນໄດ້ເນັ້ນໃສ່ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ 8 ແມ່ນເພື່ອສ້າງບ້ານໃຫ້ມີຄວາມເຂັ້ມແຂງ ແລະ ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ແລະ ມີການເຊື່ອມຕໍ່ພື້ນທີ່ເຫຼົ່ານີ້ ດ້ວຍຖະໜົນຫົນທາງ ແລະ ປັບປຸງລະບົບພື້ນຖານໂຄງລ່າງ. ໄດ້ມີການລະບຸວ່າ ການພັດທະນາຊ່ວຍເຫຼືອເພີ່ມເຕີມ ແມ່ນມີຄວາມຈຳເປັນສຳຫຼັບກຸ່ມຄົນຜູ້ທີ່ທຸກຈົນ, ໃນພື້ນທີ່ ທີ່ຍັງຂາດເຂີນການເຂົ້າເຖິງພື້ນຖານໂຄງລ່າງ, ຕະຫຼາດ ແລະ ການບໍລິການຕ່າງໆ ທີ່ຍັງເປັນອຸປະສັກໃນການພັດທະນາ ແລະ ການຫຼຸດຜ່ອນຄວາມທຸກຍາກ. ນະໂຍບາຍສະວັດດີການສັງຄົມ ແລະ ການຫຼຸດຜ່ອນຄວາມທຸກຍາກຈະຕ້ອງໄດ້ຮັບການປັບປຸງ ເພື່ອຄວາມຕ້ອງການຂອງປະຊາຊົນບັນດາເຜົ່າ ແລະ ຄວາມສາມາດໃນດ້ານຕ່າງໆ ແລະ ແກ້ໄຂບັນຫາບົດບາດຍິງ-ຊາຍ ຂອງຊົນເຜົ່າຕ່າງໆ ເພື່ອປັບປຸງຮາກຖານຂອງຄົນຮຸ່ນໃໝ່.

ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ 8 ໄດ້ເນັ້ນໃສ່ຄວາມສຳຄັນໃນການສືບຕໍ່ປັບປຸງ ແລະ ພັດທະນາ ຂໍ້ມູນຂ່າວສານ ແລະ ພາກສ່ວນວັດທະນະທຳ ໂດຍການເສີມຂະຫຍາຍຄຸນຄ່າມູນເຊື້ອ ແລະ ວັດທະນະທຳ ບົນພື້ນຖານຄວາມຫຼາກຫຼາຍທາງດ້ານວັດທະນະທຳຂອງຊົນເຜົ່າຕ່າງໆ ແລະ ເຜີຍແຜ່ຮີດຄອງປະເພນີເຫຼົ່ານີ້ ໃນເວທີສາກົນ. ແຜນການຫ້າປີນີ້ ຍັງຍັງໄດ້ສົ່ງເສີມຄວາມສະເໝີພາບລະຫວ່າງປະຊາຊົນບັນດາເຜົ່າ ໂດຍການສົ່ງເສີມຄວາມຮູ້ສຶກພາກພູມໃຈ ໃນລັກສະນະປະຫວັດສາດຂອງຊົນເຜົ່າຕ່າງໆ ແລະ ອາໄສຜູ້ເຖົ້າຜູ້ແກ່ ແລະ ຜູ້ນຳ ອາວຸໂສ ຂອງເຜົ່າຕ່າງໆ ເພື່ອສົ່ງເສີມຄວາມສາມັກຄີລະຫວ່າງຄົນໃນຊົນເຜົ່າ ໃຫ້ເປັນການຮັບປະກັນໃນການພັດທະນາ.

### 2.1.4 ກົດໝາຍທີ່ດິນ (2013)

ກົດໝາຍຄຸ້ມຄອງສິດທິທີ່ດິນ ໃນ ສປປ ລາວ ລວມມີ ລັດຖະທຳມະນູນປີ 2003, ກົດໝາຍຊັບສິນ ປີ 1990, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ປີ 2004 ແລະ ກົດໝາຍວ່າດ້ວຍ ມໍລະດົກ ແລະ ສິດທິການສືບທອດ ແລະ ກົດໝາຍວ່າດ້ວຍທີ່ດິນ ປັບປຸງ ປີ 2013.

ລັດຖະທຳມະນູນໄດ້ຮັບຮອງວ່າ ລັດຈະປົກປ້ອງສິດທິດ້ານຊັບສິນ ແລະ ມໍລະດົກ ຂອງສ່ວນບຸກຄົນ ແລະ ຂອງສ່ວນລວມ. ລັດຖະທຳມະນູນຍັງໄດ້ກຳນົດວ່າ ດິນທັງໝົດ ແມ່ນ "ມໍລະດົກຂອງຊາດ" ເຊິ່ງລັດຈະຮັບປະກັນການຊົມໃຊ້, ການຖ່າຍໂອນ ແລະ ສິດທິການສືບທອດທີ່ດິນ ດັ່ງທີ່ໄດ້ກຳນົດໄວ້ໃນກົດໝາຍ. ໃນປີ 1990 ໄດ້ມີການປະກາດໃຊ້ກົດໝາຍວ່າດ້ວຍ ຊັບສິນ ແລະ ພ້ອມກັບໄດ້ກຳນົດຊັບສິນເປັນ ຫ້າ ປະເພດ ລວມມີ: ຊັບສິນແຫ່ງລັດ, ຊັບສິນລວມໝູ່; ຊັບສິນສ່ວນບຸກຄົນ, ຊັບສິນເອກະຊົນ (ເປັນຊັບສິນຂອງຫົວໜ່ວຍທຸລະກິດເອກະຊົນ ນອກເໜືອຈາກ ຊັບສິນສະສົມ ຫຼື ຊັບສິນສ່ວນບຸກຄົນ) ແລະ ຊັບສິນສ່ວນຕົວ (ເປັນຊັບສິນທີ່ຊົມໃຊ້ສ່ວນຕົວ). ພ້ອມກັນນັ້ນ, ກໍ່ຍັງໄດ້ກຳນົດຄວາມເປັນເຈົ້າຂອງຂອງດິນ, ຊັບພະຍາກອນໃຕ້ດິນ , ນ້ຳ, ປ່າໄມ້ ແລະ ສັດປ່າ ທີ່ລັດເປັນເຈົ້າຂອງ, ເຖິງແມ່ນວ່າ ລັດຈະມອບສິດທິໃນການຄອບຄອງ, ນຳໃຊ້, ໂອນຖ່າຍ ແລະ ການສືບທອດ ໃຫ້ແກ່ພາກສ່ວນອື່ນໆ (ລັດຖະທຳມະນູນຂອງ ສປປ ລາວ ປີ  2003; ກົດໝາຍວ່າດ້ວຍທີ່ດິນ ປີ 1990).

ດິນທັງໝົດແມ່ນເປັນຂອງປະຊາຊົນບັນດາເຜົ່າ ແລະ ລັດຈະຕ້ອງປົກປ້ອງສິດທິໃນໄລຍະຍາວ ໂດຍຮັບປະກັນສິດທິການຊົມໃຊ້, ການຈັບຈອງ, ການຖ່າຍໂອນ ແລະ ການສືບທອດ. ກົດໝາຍວ້າດ້ວຍທີ່ດິນ ໄດ້ກຳນົດປະເພດຂອງດິນ (ດິນກະສິກຳ , ດິນປ່າໄມ້, ດິນພື້ນທີ່ນ້ຳ, ດິນອຸດສາຫະກຳ, ດິນຄົມມະນາຄົມ, ດິນວັດທະນະທຳ, ດິນຮັກສາຄວາມສະຫງົບ ແລະ ປ້ອງກັນປະເທດ ແລະ ດິນກໍ່ສ້າງ) ແລະ ກຳນົດຂອບເຂດສິດທິການຊົມໃຊ້ຂອງດິນແຕ່ລະປະເພດ. ພ້ອມດຽວກັນ, ກໍ່ໄດ້ມີການສ້າງຕັ້ງອົງກອນພື້ນຖານ ໃນການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ກອບສຳຫຼັບການລົງທະບຽນທີ່ດິນ. ກົດໝາຍວ່າດ້ວຍທີ່ດິນ ໄດ້ສະໜອງພື້ນຖານສຳຫຼັບສິດທິການລົງທະບຽນທີ່ດິນ ແລະ ກຳນົດໃບຢັ້ງຢືນເສຍພາສີທີ່ດິນ ແລະ ໃບຕາດິນ. ບຸກຄົນ ແລະ ອົງກອນຕ່າງໆ ເຂົ້າເຖິງທີ່ດິນໄດ້ໂດຍຜ່ານສິດທິການນຳໃຊ້ທີ່ດິນ. ວຽກງານໃບຕາດິນທີ່ຜ່ານມາ ໄດ້ມີການອອກໃບຕາດິນມອບສິດຊົມໃຊ້ທີ່ດິນຢ່າງເປັນທາງການແບບຖາວອນ ຢູ່ໃນພື້ນທີ່ໃນເມືອງ ແລະ ຊານເມືອງ, ສ່ວນວຽກງານການຈັດສັນທີ່ດິນ ເພື່ອການກະສິກຳ ແລະ ທີ່ດິນປ່າໄມ້ ໄດ້ມີການມອບສິດຊົມໃຊ້ຢ່າງເປັນທາງການແບບຊົ່ວຄາວ. ການຄອບຄອງທີ່ດິນໃນຊົນນະບົດ , ທີ່ເປັນພື້ນທີ່ຫ່າງໄກສອກຫຼີກ ແມ່ນຍັງບໍ່ທັນໄດ້ມອບຢ່າງເປັນທາງການ.

ກົດໝາຍວ່າດ້ວຍທີ່ດິນ ໄດ້ກຳນົດໃຫ້ໃບຕາດິນເປັນຫຼັກຖານສິດນຳໃຊ້ແບບຖາວອນ ແລະ ໄດ້ສ້າງລະບົບໃບຢັ້ງຢືນການຊົມໃຊ້ທີ່ດິນແບບຊົ່ວຄາວ (ໃບຢັ້ງຢືນເສຍພາສີທີ່ດິນ) ສຳລັບ ດິນກະສິກຳ ແລະ ດິນປ່າໄມ້, ອະນຸຍາດໃຫ້ຊົມໃຊ້ທີ່ດິນດັ່ງກ່າວ , ສາມາດເປັນມໍລະດົກສອບທອດໄດ້ ແຕ່ບໍ່ສາມາດທີ່ຈະຖ່າຍໂອນ, ໃຫ້ເຊົ່າ ຫຼື ໃຊ້ເປັນຫຼັກຄຳປະກັນໄດ້. ກົດໝາຍວ່າດ້ວຍທີ່ດິນ ຍັງໄດ້ກຳນົດດັ່ງນີ້: ອະນຸຍາດໃຫ້ພົນລະເມືອງລາວເຊົ່າທີ່ດິນ ຈາກລັດໄດ້ເຖິງ 30 ປີ; ອະນຸຍາດໃຫ້ ລັດປ່ອຍເຊົ່າ ຫຼື ໃຫ້ຕ່າງຊາດສຳປະທານໄດ້; ຫ້າມບໍ່ໃຫ້ມີການເກັງກຳໄລທີ່ດິນ; ແລະ ຮັບປະກັນການຊົດເຊີ ຍໃນກໍລະນີລັດມີການເວນຄືນທີ່ດິນ. ກົດໝາຍວ່າດ້ວຍທີ່ດິນ ຍັງໄດ້ກຳນົດການແກ້ໄຂຂໍ້ຂັດແຍ່ງໃນການຕັ້ງພູມລຳເນົາ ກ່ອນຈະຍື່ນເຖິງເຈົ້າໜ້າທີ່ການຄຸ້ມຄອງທີ່ດິນທ້ອງຖິ່ນ ຫຼື ກ່ອນທີ່ຈະຍື່ນເຖິງສານປະຊາຊົນ.

ປະຊາຊົນຫຼາຍຊົນເຜົ່າ ໄດ້ມີການນຳໃຊ້ທີ່ດິນ ແລະ ການຄຸ້ມຄອງຊັບພະຍາກອນ ເຊິ່ງມີການດັດປັບແບບບໍ່ຊ້ຳກັນໃນພື້ນທີ່ສູງ. ສິ່ງເຫຼົ່ານີ້ໄດ້ມີການປະຕິບັດກັນມານັບຫຼາຍເຊັ່ນຄົນ (ຕົວຢ່າງວ່າ ເປັນການປະຕິບັດຕາມປະເພນີ) ແລະ ເປັນການຍູ້ໜູນໂດຍຜ່ານທາງການປະຕິບັດຕາມພິທີກຳ ແລະ ປະເພນີ (Mann and Luangkhot 2008). ການຄຸ້ມຄອງທີ່ດິນທີ່ປະຕິບັດຕາມລະບົບປະເພນີ ແລະ ການຈັດສັນທີ່ມີຢູ່ຄວບຄູ່ໄປກັບລະບົບທີ່ເປັນທາງການ, ທີ່ໄດ້ມີການລິເລີ່ມມາແລ້ວກ່ອນໜ້ານີ້ ເພື່ອເປັນການຈັດຕັ້ງປະຕິບັດແບບປະສົມປະສານ ລະຫວ່າງການປະຕິບັດຕາມປະເພນີ ໃຫ້ເຂົ້າກັບກົດໝາຍທີ່ເປັນທາງການ. ໃນພື້ນທີ່ຊົນນະບົດຫຼາຍໆແຫ່ງ ຂອງ ສປປ ລາວ ການຄວບຄຸມຊັບສິນທົ່ວໄປຂອງຊຸມຊົນ ເຊັ່ນ: ປ່າໄມ້ ຫຼື ທົ່ງຫຍ້າລ້ຽງສັດ ແລະ ໄດ້ສ້າງກົດລະບຽບທ້ອງຖິ່ນຂຶ້ນ ເພື່ອ ຄຸ້ມຄອງ ຊັບພະຍາກອນດິນ ແລະ ການຈັດສັນທີ່ດິນ. ກົດໝາຍວ່າດ້ວຍ ຊັບສິນ ປີ 1990 ໄດ້ຄຳນຶງເຖິງການຮ່ວມມືກັນ ຫຼື ສິດທິຊັບສິນຂອງຊຸມຊົນໂດຍທົ່ວໄປ. ດຳລັດຂອງນາຍົກລັດຖະມົນຕີ ເລກທີ 88 ປີ  2006 ວ່າດ້ວຍການອອກໃບຕາດິນ ແລະ ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ 7 ໄດ້ລວມມີການອອກໃບຕາດິນຊຸມຊົນ ເພື່ອການຈັດສັນທີ່ດິນ ໂດຍລັດຖະບານ ໃຫ້ແກ່ຊຸມຊົນ (ອົງການພັດທະນາສາກົນຂອງສະຫະລັດອາເມລິກາ [USAID] 2013). ຫຼາຍຊຸມຊົນຊົນເຜົ່າໄດ້ມີການກຳນົດເປັນພື້ນທີ່ທີ່ແນ່ນອນທາງດ້ານປະເພນີທີ່ເປັນພື້ນທີ່ສັກສິດ (ປ່າສັກສິດ) ນີ້ເປັນສິ່ງສຳຄັນໃນແງ່ວັດທະນະທຳ ທີ່ຄວນໄດ້ຮັບການເຄົາລົບ.

ພາຍໃຕ້ຮີດຄອງປະເພນີ ຫຼື ບັນດາກົດລະບຽບໃນຊົນນະບົດທີ່ບໍ່ເປັນທາງການ ຊຸມຊົນທ້ອງຖິ່ນຕ່າງໆ ໄດ້ຄວບຄຸມຊັບສິນທົ່ວໄປ ລວມມີ ພື້ນທີ່ດິນເຂດສູງ, ທົ່ງຫຍ້າລ້ຽງສັດ, ການຊົມໃຊ້ປ່າໄມ້ຂອງບ້ານ ແລະ ປ່າສັກສິດ. ສະມາຊິກໃນຊຸມຊົນທຸກຄົນມີສິດຊົມໃຊ້ທີ່ດິນຂອງຊຸມຊົນ ແລະ ອຳນາດການປົກຄອງບ້ານ ອາດຈະໄດ້ຮັບສິດທິການຊົມໃຊ້ ໃນລັກສະນະດຽວກັນຈາກບັນດາບ້ານອ້ອມຂ້າງ. ລະບົບການຄອບຄອງທີ່ດິນຊຸມຊົນ ໄດ້ຮັບການພັດທະນາມາເປັນໄລຍະເວລາທີ່ຍາວນານ ແລະ  ກົດລະບຽບອື່ນໆຈາກແຕ່ລະບ້ານ. ສຳລັບການຄອບຄອງທີດິນຊຸມຊົນ ແມ່ນບໍ່ມີຂະບວນການລົງທະບຽນທີ່ເປັນທາງການ ເຖິງແມ່ນວ່າມັນຈະມີຄວາມສຳຄັນທາງດ້ານວັດທະນະທຳ, ດ້ານການເມືອງ, ເສດຖະກິດ ແລະ ສັງຄົມ ກອບຂອງຊຸມຊົນທ້ອງຖິ່ນ (World Bank 2006; Mann and Luangkhot 2008).

ຫຼາຍໆຄອບຄົວໃນຊຸມຊົນນະບົດ ອາດມີການຖືສິດທິໃຊ້ຜົນປະໂຫຍດທີ່ດິນແບບບໍ່ເປັນທາງການ ຫຼື ກົດລະບຽບຕາມປະເພນີ. ສິດທິການນຳໃຊ້ທີ່ດິນແບບນີ້ ຕາມປົກແລ້ວ ຈະຢູ່ໃນຮູບແບບ ດິນລ໊ອກເຮືອນ, ດິນນາ ຫຼື ດິນໄຮ່. ສິດທິການນຳໃຊ້ທີ່ດິນແບບນີ້ ອາດຈະໄດ້ຮັບການອະນຸຍາດຈາກອຳນາດການປົກຄອງທ້ອງຖິ່ນຕາມກົດລະບຽບທ້ອງຖິ່ນ ຫຼື ຮີດຄອງປະເພນີ ແລະ ກົດລະບຽບອື່ນໆ ຈາກແຕ່ລະບ້ານ. ນາຍບ້ານອາດຈະອອກໃບຢັ້ງຢືນຄວາມເປັນເຈົ້າຂອງທີ່ດິນ ເຊິ່ງເປັນວິທີການທີ່ບໍ່ຖືກຕ້ອງ ອາດຈະນຳໃຊ້ໃນທ້ອງຖິ່ນ ເພື່ອແກ້ໄຂຂໍ້ຂັດແຍ່ງທີ່ດິນ ຫຼື ນຳໃຊ້ໃນຄອບຄົວ ເພື່ອສະແດງຄວາມເປັນເຈົ້າຂອງ ເພື່ອສະເໜີກັບພາກສ່ວນລັດ ເພື່ອຂໍອອກໃບຢັ້ງຢືນການນຳໃຊ້ທີ່ດິນ (LSC) (World Bank 2006; Mann and Luangkhot 2008; GTZ 2009).

ກົດໝາຍວ່າດ້ວຍທີ່ດິນ ຍັງໄດ້ກຳນົດວ່າ ໃນກໍລະນີ ມີໂຄງການພັດທະນາພື້ນຖານໂຄງລ່າງສາທາລະນະ ເຊິ່ງນຳມາຍັງຄວາມສູນເສຍມາສູ່ຕົ້ນໄມ້, ພືດລະປູກ ຫຼື ຕຶກອາຄານຂອງເອກະຊົນ, ເຈົ້າຂອງທີ່ດິນ ມີສິດທີ່ຈະໄດ້ຮັບການຊົດເຊີຍຕໍ່ກັບຄວາມສູນເສຍດັ່ງກ່າວ.

## 2.1.5 ບັນດາເຄື່ອງມືສາກົນທີ່ກ່ຽວຂ້ອງ

ລັດຖະທຳມະນູນຂອງ ສປປ ລາວ ໄດ້ຮັບການປັບປຸງໃຫ້ເຂົ້າກັບຫຼັກການສິດທິມະນຸດທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ແລະ ອະນຸສັນຍາສາກົນ ທີ່ ສປປ ລາວ ໄດ້ລົງນາມ. ພາກທີ ສີ່ ມາດຕາ 34 ເຖິງ 51 ໄດ້ອະທິບາຍສິດທິພື້ນຖານຂອງພົນລະເມືອງລາວ. ນອກນັ້ນ, ສິດທິພື້ນຖານ ດັ່ງທີ່ໄດ້ກຳນົດໄວ້ໃນເຄື່ອງມືສາກົນ ແມ່ນຈະລວມ ຢູ່ໃນກົດໝາຍແຫ່ງຊາດຫຼາຍສະບັບ ເຊັ່ນວ່າ ກົດໝາຍປົກປ້ອງສິດທິ ແລະ ຄວາມສົນໃຈ ຂອງເດັກ, 2006 (ເບິ່ງຕາຕະລາງ ທີ1). ລັດຖະບານລາວ ໄດ້ສ້າງຕັ້ງ ສູນການຄົ້ນຄວ້າສິດທິມະນຸດແຫ່ງຊາດ ຢູ່ໃນນະຄອນຫຼວງວຽງຈັນ, ເຊິ່ງມີຈຸດປະສົງຫຼັກໃນການສະໜັບສະໜູນ, ສົ່ງເສີມ ແລະ ຈັດຕັ້ງປະຕິບັດ ດ້ານສິດທິມະນຸດ ພາຍໃນຂອບເຂດທົ່ວປະເທດ. ພ້ອມກັນນັ້ນ, ກໍ່ຍັງມີໜ້າທີ່ໃນການພິຈາລະນາ ແລະ ດຳເນີນການ ຄົ້ນຄວ້າກ່ຽວກັບຊົນເຜົ່າ. ສູນດັ່ງກ່າວນີ້ ໄດ້ຮັບການອະນຸມັດ ໂດຍ ດຳລັດ ເລກທີ 95 ລົງວັນທີ 11/07/06 ແລະ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 137 ລົງວັນທີ 24/07/2006. ສປປລາວ ໄດ້ເຂົ້າເປັນສະມາຊິກ ອົງການແຮງງານສາກົນ (International Labour Organization) ແຕ່ປີ 1964. ປະເທດໄດ້ລົງນາມ ໃນ 8 ອານຸສັນຍາ ຂອງອົງການແຮງງານສາກົນ ເຊິ່ງ ໃນນັ້ນ ມີ 5 ໃນ 8 ອານຸ ສັນຍາຫຼັກ ຂອງອົງການແຮງງານສາກົນ, ອານຸສັນຍາ 169 ວ່າດ້ວຍກຸ່ມຊົນເຜົ່າ ແມ່ນຍັງບໍ່ທັນໄດ້ລົງນາມ.

### ຕາຕະລາງ 1 ສົນທິສັນຍາ ແລະ ອະນຸສັນຍາສາກົນ ໃນ ສປປ ລາວ.

| ລຳດັບ | ຊື່ຂອງ ສົນທິສັນຍາ | ວັນທີ່ລົງນາມ | ວັນທີ່ຮັບເຂົ້າເປັນພາຄີ |
|---|---|---|---|
| 1 | ສົນທິສັນຍາສາກົນ ວ່າດ້ວຍ ສິດທິທາງດ້ານພົນລະເຮືອນ ແລະ ດ້ານການເມືອງ | 7 ທັນວາ 2000 | 29 ກັນຍາ 2009 |
| 2 | ສົນທິສັນຍາ ວ່າດ້ວຍ ສິດທິຂອງຄົນພິການ | 15 ມັງກອນ 2008 | 29 ກັນຍາ 2009 |
| 3 | ສົນທິສັນຍາສາກົນ ວ່າດ້ວຍ ການຄຸ້ມຄອງບໍ່ໃຫ້ບຸກຄົນຖືກບັງຄັບສູນຫາຍໄປ | 29 ກັນຍາ 2008 | ຍັງບໍ່ທັນໄດ້ຮັບ |
| 4 | ສົນທິສັນຍາສາກົນ ວ່າດ້ວຍການປົກປ້ອງສິດທິ ການເຄື່ອນຍ້າຍແຮງງານ ແລະ ສະມາຊິກໃນຄອບຄົວຂອງເຂົາເຈົ້າ. | ຍັງບໍ່ທັນໄດ້ເຊັນ | ຍັງບໍ່ທັນໄດ້ຮັບ |
| 5 | ສົນທິສັນຍາ ວ່າດ້ວຍ ການຕໍ່ຕ້ານການທາລຸນ ແລະ ໃຊ້ຄວາມຮັນແຮງອື່ນໆ, ການປະຕິບັດ ຫຼື ການລົງໂທດທີ່ໄຮ້ມະນຸດສະທຳ ຫຼື ການຢໍ້າຢີສັກສີ | 21 ກັນຍາ 2010 | 26 ກັນຍາ 2012 |
| 6 | ສົນທິສັນຍາ ວ່າດ້ວຍ ສິດທິຂອງເດັກ | | 8 ພຶດສະພາ 1991 (a) |
| 7 | ສົນທິສັນຍາ ວ່າດ້ວຍ ການລົບລ້າງທຸກຮູບແບບການຈຳແນກຕໍ່ເພດຍິງ | 17 ກໍລະກົດ 1980 | 14 ສິງຫາ 1981 |
| 8 | ສົນທິສັນຍາສາກົນ ວ່າດ້ວຍ ສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ | 7 ທັນວາ 2000 | 13 ກຸມພາ 2007 |
| 9 | ສົນທິສັນຍາສາກົນ ວ່າດ້ວຍ ການກຳຈັດທຸກຮູບແບບຂອງການຈຳແນກເຊື້ອຊາດ | | 22 ກຸມພາ 1974 (a) |
| 10 | ສົນທິສັນຍາຂອງສະຫະປະຊາຊາດ ວ່າດ້ວຍ ການສໍ້ລາດບັງຫຼວງ | 10 ທັນວາ 2003 | 29 ກັນຍາ 2009 |

# 3.0 ກຸ່ມຊົນເຜົ່າທີ່ຢູ່ໃນພື້ນທີ່ໂຄງການ

ສປປ ລາວ ເປັນປະເທດທີ່ມີຊົນເຜົ່າຫຼາຍທີ່ສຸດ ໃນບັນດາປະເທດອາຊີຕາເວັນອອກສ່ຽງໃຕ້. ປະຊາກອນທົ່ວປະເທດມີປະມານ 6.8 ລ້ານຄົນ ສາມາດແບ່ງຊົນເຜົ່າເປັນ ສີ່ ໝວດພາສາ: ໝວດພາສາ ລາວ-ໄຕ (67%), ໝວດພາສາ ມອນ-ຂະແມ (21%), ໝວດພາສາ ມົ້ງ-ອິວມຽນ (8%) ແລະ ໝວດພາສາ ຈີນ-ຕິເບດ (3%). ໃນບັນດາກຸ່ມເຫຼົ່ານີ້ປະກອບມີ 49 ຊົນເຜົ່າ ແລະ ຫຼາຍກວ່າ 200 ຊົນເຜົ່າຍ່ອຍ. ໂດຍສະເພາະແມ່ນ ໝວດພາສາ ລາວ-ໄຕ ປະກອບມີແປດຊົນເຜົ່າ, ໝວດພາສາ ມອນ-ຂະແມ ມີ 32 ຊົນເຜົ່າ, ໝວດພາສາ ມົ້ງ-ອິວມຽນ ມີ 2 ຊົນເຜົ່າ ແລະ ຈີນ-ຕິເບດ ມີ 7 ຊົນເຜົ່າ.

ແຂວງ ອຸດົມໄຊ, ມີປະມານ 12 ຊົນເຜົ່າ, ຊຶ່ງເຜົ່າທີ່ໃຫຍ່ທີ່ສຸດແມ່ນ ເຜົ່າກຶມມຸ. ອີງຕາມຫ້ອງການປົກຄອງແຂວງ, ເຜົ່າກຶມມຸ ແມ່ນເຜົ່າທີ່ນອນໃນໝວດພາສາ ມອນ-ຂະແມ ປະກອບມີ ກຶມມຸລື້, ກຶມມຸຂອງ, ກຶມມຸອູ, ກຶມມຸບິດ ລວມເປັນປະມານ 60% ຂອງຈໍານວນປະຊາກອນ. ຊົນເຜົ່າມົ້ງຂາວ, ເປັນເຜົ່າທີ່ໃຫຍ່ເປັນອັນດັບສອງໃນຊົນເຜົ່າມົ້ງ ກວມເອົາ 14% ຂອງເຜົ່າມົ້ງ. ເຜົ່າ ໄຕດໍາ, ເປັນເຜົ່າທີ່ນ້ອຍກວ່າໝູ່ ເປັນເຜົ່າໜຶ່ງທີ່ນອນໃນ ເຜົ່າ ໄຕ-ກະໄດ ກວມເອົາ 2% ຂອງ ເຜົ່າ ໄຕ-ກະໄດ. ບັນດາເຜົ່າ ອື່ນໆທີ່ຢູ່ໃນແຂວງ ຍັງມີ ເຜົ່າ ອາຄາ (ໄຕດໍາ ແລະ ໄຕຂາວ), ຜູ້ນ້ອຍ (ຜູ້ຊາງ, ຜູ້ກອງແຊັດ ແລະ ຜູ້ຍຶດ),ລາວຮຸຍ (ຫຼືເອີ້ນວ່າ "ເລນເຕັນ"), ພອນ, ລີ, ຢັງ, ໂຄ ແລະ ໂຮ (ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງ ອຸດົມໄຊ). ມີ ສິບ ສອງ ຊົນເຜົ່າ ທີ່ມີພາສາ, ວັດທະນະທໍາ ແລະ ຮີດຄອງປະເພນີ ທີ່ເປັນຂອງຕົນເອງ.

ມີໜຶ່ງ ບ້ານ ທີ່ໄດ້ກໍານົດ ການພັດທະນາພື້ນຖານໂຄງລ່າງ ຂອງໂຄງການຍ່ອຍ, ບ້ານ ນາສ້າວ, ມີເຜົ່າກຶມມຸ, ເຜົ່າຜູ້ນ້ອຍ ແລະ ເຜົ່າ ຂະມຸ. ບ້ານ ທີສອງ ແມ່ນບ້ານ ນາເລົາ ແລະ ມີບັນດາຊົນເຜົ່າ ດັ່ງຕາຕະລາງ 2 ລຸ່ມນີ້: .

### ຕະຕະລາງ 2 ບັນດາຊົນເຜົ່າ ໃນ ບ້ານ ນາເລົາ, ເມືອງ ອຸດົມໄຊ, ແຂວງ ອຸດົມໄຊ, 2016

| ຊົນເຜົ່າ | ຈໍານວນຄອບຄົວ | ຈໍານວນປະຊາກອນ | ຈໍານວນຜູ້ຍິງ |
|---|---|---|---|
| ລາວ ລຸ່ມ | 13 | 64 | 38 |
| ໄຕດໍາ | 1 | 5 | 2 |
| ລື້ | 253 | 1182 | 663 |
| ກຶມມຸ | 5 | 54 | 20 |
| ມົ້ງ | 3 | 27 | 14 |
| ຮໍ້ | 12 | 132 | 47 |
| ຜູ້ນ້ອຍ | 12 | 111 | 35 |
| ລວມ | 299 | 1,575 | 819 |

ຂໍ້ມູນກ່ຽວກັບ ສອງ ຊົນເຜົ່າ ໃຫຍ່ ທີ່ອາໄສຢູ່ແຂວງອຸດົມໄຊ ຄື ເຜົ່າກຶມມຸ ແລະ ເຜົ່າມົ້ງ ດ້ານລຸ່ມນີ້ ແມ່ນໄດ້ມາຈາກ ບົດສຶກ ສາ ສິດທິດ້ານທີ່ດິນ ແລະ ຊັບສິນ ຕາມຈາຮີດປະເພນີຂອງແມ່ຍິງ ຫຼື ລະບົບ ຂະນົບທໍານຽມປະເພນີ ຂອງ ຫ້າ ຊົນເຜົ່າ ໃນ ສປປ ລາວ (Mann and Luangkhot, 2008).

**ເຜົ່າ ກຶມມຸ** ເປັນເຜົ່າທີ່ມີມາຕັ້ງແຕ່ດົນນານຢູ່ທາງພາກເໜືອຂອງ ສປປ ລາວ, ແລະ ໃນປັດຈຸບັນພວກເຂົາ ໄດ້ມີການຕັ້ງຖິ່ນ ຖານຢູ່ທົ່ວທຸກແຂວງທາງພາກເໜືອ ແລະ ແຂວງ ບໍລິຄໍາໄຊ. ຕໍ່ມາແມ່ນລາວລຸ່ມ, ເປັນເຜົ່າ ທີ່ມີຈໍານວນປະຊາກອນຫຼາຍກວ່າ ໝູ່ ໃນປະເທດ. ເຜົ່າກຶມມຸ ມີຫຼາຍເຜົ່າທີ່ຍ່ອຍອອກຢູ່ແບບເປັນກຸ່ມຮ່ວມກັນ ລວມມີ ເຜົ່າຣອກ, ເຜົ່າລູ, ເຜົ່າອູ ແລະ ເຜົ່າຄຣອງ. ເຜົ່າກຶມມຸ ປົກຄອງກັນດ້ວຍຄວາມເຊື່ອຖື, ທັງດ້ານຄວາມດີ ແລະ ຄວາມຊົ່ວ, ເຊິ່ງມີບົດບາດພື້ນຖານຕໍ່ກັບກົດ ໝາຍປະເພນີ. ຄວາມເຊື່ອຖືຂອງຊົນເຜົ່າກຶມມຸ ໄດ້ມີບົດບາດຕໍ່ກັບບົດບາດຍິງ-ຊາຍຂອງເຜົ່າ, ສິດທິການນໍາໃຊ້ທີ່ດິນ ແລະ ຊັບ

ສິນ ແລະ ການປ່ຽນແປງທີ່ກະທົບກັບສາຍສຳພັນລະຫວ່າງ ເຜົ່າກຶມມຸ ກັບ ໂລກພາຍນອກ ແມ່ນມີມາຕັ້ງແຕ່ດົນນານ. ລະດັບຄວາມແຕກຕ່າງຂອງຄວາມເຊື່ອ ແມ່ນມີຄວາມແຕກຕ່າງແຕ່ລະກໍລະນີ ຜູ້ຍິງ ແລະ ຜູ້ຊາຍ - ບາງຄວາມເຊື່ອ ຫຼື ສາສະໜາ ກໍ່ນັບຖືເປັນບາງເຂດ ທີ່ເປັນພື້ນທີ່ສະເພາະຂອງໃຜລາວ ແລະ ບາງຄວາມເຊື່ອຖືກໍ່ພົວພັນກັບອຳນາດການປົກຄອງ ຫຼື ຜູ້ນຳດ້ານສາສະໜາ. ຄວາມເຊື່ອຖືວິນຍານ (ເຊື່ອຖືຜີ) ມີບົດບາດຕໍ່ກິດຈະວັດປະຈຳວັນທັງຍິງ ແລະ ຊາຍ, ກິດຈະກຳໃນແຕ່ລະລະດູການ, ສິດທິໃນຊັບສິນ ແລະ ຄວາມສຳພັນດ້ານ ເພດ. ຄວາມເຊື່ອຖືອື່ນໆກ່ຽວກັບຮູບແບບຂອງເຮືອນ ແລະ ວິນຍານຂອງບັນພະບູລຸດ ຜູ້ທີ່ຄອຍປົກປັກຮັກສາຄອບຄົວໃຫ້ຢູ່ດີມີແຮງ. ສຸດທ້າຍ ແມ່ນຄວາມເຊື່ອຖືສ່ວນບຸກຄົນ ທີ່ກ່ຽວຂ້ອງກັບຜີຢ້າວຜີເຮືອນ.

ໃນແຕ່ລະເຜົ່າຍ່ອຍອາດຈະປະກອບມີຫຼາຍ ຕະກຸນ ຫຼື ເອີ້ນວ່າ “ຕະ”. ຊື່ຂອງ ຕະ ເປັນສິ່ງທີ່ບົ່ງບອກວ່າກົກເຄົ້າຂອງພວກເຂົາແມ່ນມາຈາກ ທຳມະຊາດ, ຫຼື ສັດ ຫຼື ນົກ ຊຶ່ງວ່າຕະກຸນຈະບົ່ງບອກ, ຕາມທຳມະດາແລ້ວຈະຫ້າມບໍ່ໃຫ້ກ່ຽວພັນເຖິງ ຫໍບູຊາ. ກຶມມຸລື້ ຢູ່ອຸດົມໄຊ, ອາດຈະມີ ຕະ ຕຶມອງ (ເປັນຊື່ເຫງັນຊະນິດໜຶ່ງ), ຕືວະ (ເປັນຊື່ຜັກກູດຊະນິດໜຶ່ງ), ຕືກອກ (ເປັນຊື່ນົກ) ແລະ ຊື່ອື່ນໆ. ຫໍບູຊາເປັນສິ່ງສັກສິໃນເຮືອນ ແລະ ສາຍສຳພັນຂອງ “ຕະ” ແມ່ນຂຶ້ນກັບຄອບຄົວທີ່ເດັກນ້ອຍເກີດ. ສາຍສຳພັນຂອງ “ຕະ” ເປັນຕົວກຳນົດທາງເລືອກໃນການແຕ່ງງານ ແລະ ພົວພັນເຖິງສິດທິທາງຊັບສິນ.

**ເຜົ່າ ມົ້ງຂາວ** ແມ່ນເຜົ່າຍ່ອຍຂອງຊົນເຜົ່າມົ້ງ ທີ່ມີຢູ່ໃນ ສປປ ລາວ ໃນປັດຈຸບັນ. ນອກຈາກ ເຜົ່າກຶມມຸ ແລ້ວ, ເຜົ່າມົ້ງ ກໍ່ເປັນເຜົ່າໜຶ່ງ ທີ່ມີຈຳນວນປະຊາກອນຫຼາຍ. ຕົ້ນກຳເນີດຂອງເຜົ່າມົ້ງໃນ ສປປ ລາວ ແມ່ນໄດ້ມີການອົບພະຍົບມາຈາກປະເທດຈີນໃນຕົ້ນສະຕະວັດທີ 19. ສາເຫດທີ່ເຜົ່າມົ້ງໄດ້ມີການອົບພະຍົບ ຕາມການເລົ່າຂານ ແລະ ຄົ້ນຄວ້າ ເຊື່ອກັນວ່າໃນປະຫວັດສາດເຜົ່າມົ້ງ ແລະ ເຜົ່າຫານ ຂອງຈີນ ເກີດມີຄວາມຂັດແຍ່ງກັນ, ການຂະຫຍາຍຕົວຂອງປະຊາກອນ, ບໍ່ຍອມຮັບໃນການເກັບພາສີ ແລະ ປະຕິເສດການຮ່ວມມືກັບເຜົ່າ ຫານ ຂອງຈີນ. ການອົບພະຍົບຂອງເຜົ່າມົ້ງໃນປັດຈຸບັນ ມີຢູ່ທົ່ວທຸກແຂວງທາງພາກເໜືອຂອງ ສປປ ລາວ, ທາງພາກໃຕ້ຂອງ ຢຸນນານ ປະເທດຈີນ, ທາງພາກເໜືອຂອງ ປະເທດຫວຽດນາມ ແລະ ໄທ.

ຕາມປົກກະຕິແລ້ວ ຊົນເຜົ່າມົ້ງຈະຕັ້ງຖິ່ນຖານຢູ່ໃນພື້ນທີ່ສູງ, ແລະ ຊົນເຜົ່າມົ້ງຈະມັກຝັງສົບຢູ່ທີ່ຈອມພູ. ມົ້ງຂາວ ມີຊື່ສຽງໃນການເຮັດວຽກໜັກ ແລະ ເມື່ອບໍ່ດົນມານີ້ຢູ່ທີ່ແຂວງອຸດົມໄຊ ໄດ້ຮັບການນຳໃຊ້ທີ່ດິນ ແລະ ຊັບສິນ. ມົ້ງຂາວ ຍັງມີຕະກຸນ ຫຼື ເຊັ່ງ (ຕົວຢ່າງ: ຕົວ, ວື, ຊົງ, ມົວ, ລີ, ວາ, ຢາ, ຮາ, ຈາ ແລະ ກູ). ເຊັ່ງ ເປັນຕົວກຳນົດເຂດແດນດ້ານສິດທິທີ່ດິນ ແລະ ຊັບສິນ, ແລະ ປົກປ້ອງບົດບາດຂອງເພດຊາຍ ເປັນດັ່ງຜູ້ຄວບຄຸມສິດທິທາງເລືອກຂອງເພດຍິງ, ໂດຍສະເພາະ ແມ່ນຜູ້ຍິງຄົນໃດ ຫຼື ເວລາໃດ ຈະແຕ່ງງານ.

## 4.0 ຜົນກະທົບຈາກໂຄງການ ທີ່ຄາດວ່າຈະເກີດຂຶ້ນກັບຊົນເຜົ່າ

ຄາດການວ່າ ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດຈາກນໍ້າຖ້ວມຕົວເມືອງຂອງແຂວງອຸດົມໄຊ ຈະສົ່ງຜົນກະທົບດ້ານບວກ ແລະ ດ້ານລົບ ຈາກຜົນການດຳເນີນໂຄງການຍ່ອຍ ໃນການຍື່ນສະເໜີ ການສ້າງພື້ນຖານໂຄງລ່າງ ຕະຝັ່ງກັນເຈື່ອນ, ການປັບປຸງຄອງລະບາຍນໍ້າ, ເຂື່ອນກັນນໍ້າ ແລະ ປະຕູລະບາຍນໍ້າ, ແລະ ສ່ວນສາທາລະນະແຄມນໍ້າ. ກິດຈະກຳຂອງໂຄງການຍ່ອຍການຄຸ້ມຄອງຄວາມສ່ຽງໄພພິບັດຈາກນໍ້າຖ້ວມຕົວເມືອງ ຈະສົ່ງຜົນປະໂຫຍດ ໂດຍຫຼັກໆແລ້ວແມ່ນປະຊາຊົນ ຜູ້ທີ່ອາໄສຢູ່ໃນເທດສະບານເມືອງໄຊ ເຊິ່ງວ່າຊີວິດການເປັນຢູ່ ແລະ ຊັບສິນຂອງປະຊາຊົນທີ່ຢູ່ໃນເມືອງ ຈະບໍ່ຖືກລົບກວນຫຼາຍຈາກໂຄງການລົງທຶນສ້າງພື້ນຖານໂຄງລ່າງດັ່ງກ່າວ. ຄາດວ່າ ການກໍ່ສ້າງ ຂອງ ໂຄງການລົງທຶນ ພື້ນຖານໂຄງລ່າງ ດ້ານການຄຸ້ມຄອງຄວາມສ່ຽງໄພພິບັດຈາກນໍ້າຖ້ວມຕົວເມືອງ ຈະນຳມາຍັງຜົນປະໂຫຍດດ້ານເສດຖະກິດ-ສັງຄົມ, ສຸຂະພາບ ແລະ ລະບົບນິເວດ ເຊັ່ນວ່າ: ການປ້ອງກັນລຳນໍ້າ ຈາກການຕົກຕະກອນ ເນື່ອງຈາກການໄຫຼບ່າຂອງນໍ້າ ແລະ ການເຊາະເຈື່ອນຂອງຕາຝັ່ງ, ແລະ ຫຼຸດຜ່ອນການສູນເສຍທາງຊີວິດ ແລະ ຊັບສິນ ຈາກນໍ້າຖ້ວມ. ໂຄງການຈະຊ່ວຍສ້າງສິ່ງແວດລ້ອມທີ່ປອດໄພ, ດ້ານສຸຂະພາບ ແລະ ຄວາມເປັນຢູ່ທີ່ດີ ໂດຍສະເພາະແມ່ນປະຊາຊົນ ຜູ້ທີ່ໄດ້ຮັບຜົນກະທົບຈາກເຫດການນໍ້າຖ້ວມແບບກະທັນຫັນ ໃນອະດີດທີ່ຜ່ານມາ.

ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຈະແຕກຕ່າງກັນຢ່າງຊັດເຈນຂຶ້ນກັບປະເພດ, ຂອບເຂດ ແລະ ທີ່ຕັ້ງຂອງໂຄງການຄຸ້ມຄອງຄວາມສ່ຽງໄພພິບັດຈາກນໍ້າຖ້ວມຕົວເມືອງ. ສຳລັບການກໍ່ສ້າງພື້ນຖານໂຄງລ່າງໃໝ່ໃນເທດສະບານ ເມືອງໄຊ ແຂວງອຸດົມໄຊ ແລະ ບໍລິເວນໃກ້ຄຽງ, ຈະເຫັນໄດ້ວ່າປະຊາຊົນທັງໝົດທີ່ໄດ້ຮັບຜົນກະທົບແມ່ນຢູ່ໃນລະດັບປານກາງ ແລະ ໃນວົງທີ່ຈຳກັດ, ເຖິງແນວໃດກໍ່ຕາມ ຜົນກະທົບສະສົມກໍ່ ບໍ່ຄວນຈະມອງຂ້າມ. ເຖິງຢ່າງໃດກໍ່ຕາມ, ສຳລັບປະຊາຊົນທີ່ດຳລົງຊີວິດຢູ່ພື້ນທີ່ ທີ່ມີການກຳນົດການກໍ່ສ້າງສວນສາທາລະນະຂອງສອງຝັ່ງແມ່ນໍ້າ, ຜົນກະທົບຫຼັກ ແມ່ນການຍົກຍ້າຍ ແລະ/ຫຼື ການສູນເສຍທີ່ດິນທາງນໍ້າ. ການປຶກສາຫາລືກັບຊຸມຊົນຄັ້ງທຳອິດ ຢູ່ແຂວງ, ໄດ້ມີການລະບຸວ່າ ບັນດາຄົວເຮືອນທີ່ ຢູ່ໃນພື້ນທີ່ກຳນົດ ທີ່ຈະສ້າງສວນສາທາລະນະແຄມນໍ້າ ແມ່ນປະຊາຊົນຊົນເຜົ່າ (ກຶມມຸ, ຜູ້ນ້ອຍ ແລະ ການຸກ).

# 5.0 ການກະກຽມການດຳເນີນການສຳຫຼັບກອບການມີສ່ວນຮ່ວມຂອງຊົນເຜົ່າ

ຜົນກະທົບທາງບວກຂອງໂຄງການ ຂຶ້ນກັບລະດັບຄວາມສຳເລັດໃນການສ້າງຄວາມໝັ້ນໃຈ ໃນການເຂົ້າຮ່ວມຂອງກຸ່ມຜູ້ທີ່ອ່ອນແອ (ດ້ອຍໂອກາດ), ລວມມີ ກຸ່ມຊົນເຜົ່າ, ແມ່ຍິງ, ຜູ້ເຖົ້າ ແລະ ໄວໜຸ່ມ/ເດັກນ້ອຍ. ຮຽກຮ້ອງໃຫ້ມີການເຂົ້າຮ່ວມຈາກກຸ່ມຄົນດັ່ງກ່າວ ໃນຂັ້ນຕອນການອອກແບບ ແລະ ວາງແຜນ ແລະ ມາດຕະການປ້ອງກັນ ເພື່ອໃຫ້ສາມາດຜ່ານຜ່າອຸປະສັກທາງດ້ານເສດຖະກິດ ແລະ ວັດທະນະທຳ.

ການກໍ່ສ້າງໂຄງການຍ່ອຍສວນສາທາລະນະສອງແຫ່ງ ແລະ ການຫຼຸດຜ່ອນນ້ຳຖ້ວມ ຂອງໂຄງການຍ່ອຍທີ່ຈະຈັດຕັ້ງປະຕິບັດພາຍໃຕ້ ພາກສ່ວນ ທີ 1 ອາດພົວພັນເຖິງການຄອບຄອງທີ່ດິນ ແລະ/ຫຼື ການຍົກຍ້າຍ, ເຊິ່ງເປັນຜົນກະທົບທາງລົບຕໍ່ກັບກຸ່ມຊົນເຜົ່າ ແລະ ກຸ່ມຜູ້ທີ່ອ່ອນແອ (ດ້ອຍໂອກາດ). ພາກສ່ວນທີ່ສຳຄັນ ຂອງກອບການມີສ່ວນຮ່ວມຂອງຊົນເຜົ່າ ແມ່ນເພື່ອຮັບປະກັນນະໂຍບາຍດ້ານສັງຄົມການປົກປ້ອງກຸ່ມຊົນເຜົ່າ ໄດ້ຈັດຕັ້ງປະຕິບັດ ແລະ ເຊື່ອມເຂົ້າກັບຂັ້ນຕອນຕ່າງໆ ຂອງແຜນ ແລະ ການມີຮ່ວນຮ່ວມຂອງທ້ອງຖິ່ນ ກັບ ຊຸມຊົນ.

ການດຳເນີນການກອບການມີສ່ວນຮ່ວມຂອງຊົນເຜົ່າ ສຳລັບບັນດາໂຄງການຍ່ອຍໃນພື້ນທີ່ ທີ່ກຸ່ມຊົນເຜົ່າອາໄສຢູ່ຕ້ອງມີ (ກ) ການຄັດເລືອກຂອງກຸ່ມທະນາຄານໂລກ ເພື່ອລະບຸວ່າ ກຸ່ມຊົນເຜົ່າທີ່ຢູ່ໃນເຂດພື້ນທີ່ໂຄງການ ຫຼື ການຢູ່ຮ່ວມກັນແບບເປັນກຸ່ມ; (ຂ) ຜູ້ກູ້ຢືມທຶນປະຕິບັດການປະເມີນຜົນກະທົບດ້ານສັງຄົມ ເພື່ອປະເມີນຜົນກະທົບ ແລະ ກຳນົດຜົນປະໂຫຍດທາງດ້ານວັດທະນະທຳຢ່າງເໝາະສົມ; (ຄ) ຜູ້ກູ້ຢືມທຶນປະຕິບັດການປຶກສາຫາລືແບບອິດສະຫຼະ, ກ່ອນ ແລະ ໄດ້ຮັບຂໍ້ມູນ (FPICs) ກັບ ຊົນເຜົ່າທີ່ຖືກຜົນກະທົບ ໃນການນຳທາງເປີດກວ້າງການປະກອບສ່ວນຂອງຊຸມຊົນ ໃນກິດຈະກຳຕ່າງໆທີ່ກ່ຽວຂ້ອງກັບໂຄງການ; (ງ) ຜູ້ກູ້ຢືມທຶນກະກຽມ ແລະ ເຜີຍແຜ່ແຜນພັດທະນາຊົນເຜົ່າ (ຫຼື ກອບການມີສ່ວນຮ່ວມຂອງຊົນເຜົ່າ) ເພື່ອຕອບໂຈດ ໂດຍສະເພາະແມ່ນຄວາມກັງວົນຂອງຊົນເຜົ່າ, ສະໜອງຜົນປະໂຫຍດທາງດ້ານວັດທະນະທຳຢ່າງເໝາະສົມ, ແລະ ຮັບປະກັນມາດຕະການຫຼຸດຜ່ອນຜົນກະທົບ.

ລະດັບລາຍລະອຽດທີ່ຈຳເປັນ ເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ກູ້ຢືມທຶນໄດ້ລະບຸຢູ່ໃນວັກ (ຂ), (ຄ) ແລະ (ງ) ເປັນສັດສ່ວນກັບຄວາມຊັບຊ້ອນຂອງໂຄງການທີ່ໄດ້ຍື່ນສະເໜີ ແລະ ການທຽບລັກສະນະ ແລະ ຂະໜາດ ຂອງຜົນກະທົບຈາກໂຄງການທີ່ອາດເກີດຂຶ້ນກັບກຸ່ມຊົນເຜົ່າ ບໍ່ວ່າຈະເປັນທັງດ້ານບວກ ຫຼື ດ້ານລົບ.

## 5.1 ການກັ່ນຕອງຕົວແທນຂອງກຸ່ມຊົນເຜົ່າ

ທະນະຄານໂລກ ຈະເຮັດການກັ່ນຕອງກ່ອນໄລຍະການກະກຽມໂຄງການ, ເພື່ອກຳນົດວ່າມີກຸ່ມຊົນເຜົ່າອາໄສຢູ່ໃນເຂດພື້ນທີ່ໂຄງການຫຼືບໍ່ ຫຼື ມີການຢູ່ຮ່ວມກັນແບບເປັນກຸ່ມທີ່ສະໜິດແໜ້ນ. ໂດຍອີງໃສ ການຕັດສິນໃຈດ້ານເຕັກນິກ ຈາກວິຊາການດ້ານສັງຄົມ ທີ່ມີຄຸນນະພາບ ມີຄວາມຊຳນານດ້ານສັງຄົມ ແລະ ວັດທະນະທຳ ໃນພື້ນທີ່ຂອງໂຄງການ.

OP/BP 4.10 ມີຄວາມກ່ຽວພັນກັນກັບວິທີການ ທີ່ໄດ້ກຳນົດໄວ້ໃນ ກອບການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ ໃນນີ້ຈະຖືກຕິດຕາມໂດຍລຸກຄ້າ ໃນການລົງທຶນ ໃຫ້ກຸ່ມຊົນເຜົ່າ ທີ່ຖືກກຳນົດ ໃຂຂັ້ນຕອນກັ່ນກອງ ວ່າມີໜ້າໃນເຂດໂຄງການທີ່ຈະກໍ່ສ້າງ. ມັນລວມມີຄວາມຕ້ອງການທີ່ຜູ້ກູ້ຢືມທຶນດຳເນີນການປະເມີນທາງສັງຄົມ ເພື່ອປະເມີນຜົນກະທົບທັງທາງບວກ ແລະ ທາງລົບຈາກໂຄງການທີ່ອາດຈະເກີດຂຶ້ນຕໍ່ກັບຊົນເຜົ່າ ແລະ ເພື່ອກວດສອບທາງເລືອກຂອງໂຄງການ ສຳລັບພື້ນທີ່ທີ່ອາດເກີດຜົນກະທົບທາງລົບ, ແລະເພື່ອພັດທະນາ ແຜນພັດທະນາກຸ່ມຊົນເຜົ່າ ທີ່ເປັນມາດຕະການພິເສດ ເພື່ອຫຼຸດຜ່ອນຜົນກະທົບ, ແລະ ມອບຜົນປະໂຫຍດດ້ານວັດທະນາທຳທີເໝາະສົມ.

## 5.2 ການປະເມີນຜົນກະທົບທາງສັງຄົມ

ການປະເມີນຜົນກະທົບທາງສັງຄົມ (SIA) ແມ່ນຂັ້ນຕອນການທົບທວນ ແລະ ການກຳນົດ ຜົນກະທົບດ້ານສັງຄົມ ຂອງໂຄງການກໍ່ສ້າງພື້ນຖານໂຄງລ່າງໃນປັດຈຸບັນ ຫຼື ທີ່ໄດ້ຍື່ນສະເໜີໄປແລ້ວ ແລະ ໂຄງການຊ່ວຍເຫຼືອອື່ນໆ. ອີງຕາມການປະເມີນຜົນກະທົບຮ່ວມີສາກົນ ຈະປະກອບມີຂັ້ນຕອນຂອງການວິເຄາະ, ການຕິດຕາມ ແລະ ການຄຸ້ມຄອງ ຜົນທີ່ເກີດຕາມມາຕໍ່ກັບສັງຄົມທັງທີ່ໄດ້ຕັ້ງໃຈ ແລະ ບໍ່ໄດ້ຕັ້ງໃຈ, ທັງດ້ານບວກ ແລະ ດ້ານລົບ ຂອງແຜນຊ່ວຍເຫຼືອອື່ນໆ (ນະໂຍບາຍ, ລາຍການ, ແຜນການ, ໂຄງການຕ່າງໆ) ແລະ ທຸກຂັ້ນຕອນການປ່ຽນແປງທາງສັງຄົມທີ່ໄດ້ຮ້ອງຂໍການຊ່ວຍເຫຼືອດັ່ງກ່າວ.

ຄວາມກວ້າງ, ຄວາມເລິກ ແລະ ປະເພດຂອງການວິເຄາະໃນການປະເມີນສັງຄົມ ເປັນສັດສ່ວນກັບທຳມະຊາດ ແລະ ຂອບເຂດຂອງຜົນກະທົບຈາກໂຄງການທີ່ອາດຈະເກີດຂຶ້ນກັບກຸ່ມຊົນເຜົ່າ ບໍ່ວ່າຈະເປັນຜົນກະທົບທາງບວກ ຫຼື ທາງລົບ. ການປະເມີນ

ຜົນກະທົບທາງສັງຄົມ (SIA) ຄວນຈະລວມເຂົ້າກັບບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ (ESIA) ທີ່ໄດ້ອະທິບາຍຢູ່ໃນກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ແລະ ນຳໃຊ້ຜົນການວິເຄາະ ເພື່ອພັດທະນາແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ດ້ານສັງຄົມ (SMMP).

ໃນຊ່ວງເວລາການປຶກສາຫາລືກັບຊຸມຊົນໃນເບື້ອງຕົ້ນຢູ່ທີ່ ແຂວງ ອຸດົມໄຊ, ສິ່ງທີ່ໄດ້ມາ ແມ່ນການສະເໜີວິທີການ ເພື່ອຫຼຸດຜ່ອນຜົນກະທົບທາງສັງຄົມ ຕໍ່ກັບປະຊາຊົນ/ຕໍ່ກັບເຮືອນຊານບ້ານຊ່ອງ ຊຶ່ງລວມມີຫຼາຍຊົນເຜົ່າ:

- ການເກັບກຳຂໍ້ມູນພື້ນຖານ ແມ່ນມີຄວາມສຳຄັນທີ່ສຸດ ເນື່ອງຈາກວ່າ ຂໍ້ມູນມືສອງບໍ່ຄ່ອຍຈະໄດ້ຮັບການດັດແກ້ທັນເຫດການ.
- ການມີສ່ວນຮ່ວມຂອງປະຊາຊົນໃນທ້ອງຖິ່ນ ຕາມພື້ນຖານການວິເຄາະຜົນກະທົບ ແມ່ນມີຄວາມຈຳເປັນໃນການຮັບປະກັນວ່າປະຊາຊົນຜູ້ທີ່ອ່ອນແອ (ດ້ອຍໂອກາດ), ລວມມີບັນດາກຸ່ມຊົນເຜົ່າ ຈະຕ້ອງໄດ້ເຂົ້າຮ່ວມໃນຂະບວນການຕັດສິນໃຈທີ່ກ່ຽວຂອງກັບການພັດທະນາໃໝ່.
- ຖ້າຫາກຈຳເປັນຕ້ອງມີການຈັດສັນຍົກຍ້າຍປະຊາຊົນຜູ້ທີ່ອ່ອນແອ (ດ້ອຍໂອກາດ) ລວມທັງກຸ່ມຊົນເຜົ່າ ຄວນເອົາໃຈໃສ່ປັບປຸງໂອກາດການເຂົ້າເຖິງການສຶກສາ ແລະ ສະໜອງທາງເລືອກດ້ານການດຳລົງຊີວິດແກ່ເຂົາເຈົ້າໃຫ້ຫຼາຍຂຶ້ນ.
- ການຝຶກອົບຮົມສ້າງຄວາມເຂົ້າໃຈກ່ຽວກັບການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ແມ່ນມີຄວາມສຳຄັນ ໃນການເຜີຍແຜ່ຂໍ້ມູນຂ່າວສານ
- ການສະໜອງ ຫຼື ການກະຈາຍຂໍ້ມູນຂ່າວສານເປັນພາສາທ້ອງຖິ່ນ ແມ່ນມີຄວາມສຳຄັນ ແລະ ຜູ້ທີ່ໃຫ້ການອະທິບາຍກ່ຽວກັບໂຄງການຄວນຈະເວົ້າເປັນພາສາທ້ອງຖິ່ນ.

ໃນກໍລະນີທີ່ຂະບວນການກັ່ນກອງ ທີ່ອະທິບາຍໃນຂໍ້ 5.1 ລະບຸກ່ຽວກັບການມີໜ້າຂອງກຸ່ມຊົນເຜົ່າ ໃນພື້ນທີ່ໂຄງການ, ຂະບວນການປະເມີນທາງສັງຄົມສະເພາະດ້ານ ໂດຍສະເພາະຈະດຳເນີນຕາມຫຼັກການທີລະບຸໄວ້ໃນ OP 4.10. ນີ້ແມ່ນຂະບວນການເພີ່ມເຕີມ ຂອງຂະບວນການປະເມີນຜົນກະທົບທາງສັງຄົມ ຖືກຈັດຕັ້ງປະຕິບັດ ເພື່ອໂຄງການຍ່ອຍ. ອົງປະກອບສຳຄັນ ຂອງການປະເມີນທາງສັງຄົມໂດຍສະເພາະເພື່ອຊົນເຜົ່າ.

a) ຂຶ້ນຢູ່ກັບຂະໜາດຂອງໂຄງການຍ່ອຍ, ການທົບທວນກອບໂຄງຮ່າງຈັດຕັ້ງ ເພື່ອນຳໃຊ້ກັບກຸ່ມຊົນເຜົ່າທີອາໄສໃນຊຸມຊົນຖືກຜົນກະທົບ. ຕົວຢ່າງ, ໃດ້ມີ ໜ່ວຍງານຂອງຊຸມຊົນ ຫຼື ໂຄງສ້າງການຕັດສິນໃຈ ແລະ ຄວາມສຳພັນຂອງພວກເຂົາກັບໜ່ວຍງານທ້ອງຖິ່ນເປັນແນວໃດ?

b) ການເກັບກຳ ແລະ ການວິເຄາະ ຂໍ້ມູນພື້ນຖານທີ່ກ່ຽວຂ້ອງກັບວັດທະນາທຳ, ສັງຄົມ-ເສດຖະກິດ ແລະ ການເມືອງຊຸມຊົນ ຂອງ ຊຸມຊົນທ້ອງຖິ່ນທີ່ຖືກຜົນກະທົບ, ແລະ ຖ້າກ່ຽວຂ້ອງກັບເນື້ອທີ່ ແລະ ດິນແດນ ທີ່ເຂົາຄອບຄອງ ແລະ ຊັບພະຍາກອນທຳມະຊາດ ທີເຂົາໃຊ້ເພິ່ງພາດຳລົງຊີວິດ. ນີ້ອາດມີຄວາມກ່ຽວຂ້ອງໂດຍສະເພາະດ້ານການດຳລົງຊີວິດຂອງກຸ່ມຊົນເຜົ່າ ທີ່ອາໄສຊັບພະຍາກອນນໍ້າ ເຊິ່ງອາດຈະໃດ້ຮັບຜົນກະທົບຈາກການກໍ່ສ້າງທີ່ໄດ້ເງິນຂາກໂຄງການ.

c) ການນຳໃຊ້ຂໍ້ມູນພື້ນຖານ, ບັນດາຜູ້ມີສ່ວນໄດ້ສ່ວນເສຍ ຈະຖືກກຳນົດໃນຊຸມຊົນທີ່ໄດ້ຮັບຜົນກະທົບ, ແລະ ຂະບວນການທີ່ສອດຄ່ອງກັບວັດທະນາທຳ ເພື່ອການປຶກສາຫາລື ກັບກຸ່ມຊົນເຜົ່າ ໃນລະຫວ່າງການກະກຽມໂຄງການຍ່ອຍ ແລະ ການຈັດຕັ້ງປະຕິບັດ ຈະຖືກກຳນົດກັບບັນດາຜູ້ມີສ່ວນໄດ້ສ່ວນເສຍເຫຼົ່ານັ້ນ.

d) ການປະເມີນ, ໂດຍອີງໃສການປະກອບຄຳເຫັນຢ່າງອິດສະຫຼະ, ແລະ ການແຈ້ງການປຶກສາຫາລື, ກັບຊຸມຊົນກຸ່ມຊົນເຜົ່າ, ຜົນກະທົບທີ່ອາດເກີດຂຶ້ນ ແລະ ຜົນກະທົບດ້ານບວກ ຂອງໂຄງການຍ່ອຍ. ການປະເມີນນີ້ມີຄວາມອ່ອນໄຫວກັບບຸກຄົນທີມີຄວາມອ່ອນແອ ໃນຊຸມຊົນກຸ່ມຊົນເຜົ່າ, ການພິຈາລະນາສະຖານະການທີ່ແຕກຕ່າງກັນ, ສາຍສຳພັນລະຫວ່າງທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ແລະ ໂອກາດໃນການພັດທະນາທີ່ຈຳກັດ ເວລາທຽບກັບກຸ່ມຄົນອື່ນໆ.

e) ການກຳນົດ ແລະ ປະເມີນຜົນ, ໂດຍອີງໃສການແບບອິດສະຫຼະ, ກ່ອນ ແລະ ໄດ້ຮັບຂໍ້ມູນ ກັບຊຸມຊົນກຸ່ມຊົນເຜົ່າ, ເປັນບັນດາມາດຕະການທີ່ຈຳເປັນ ເພື່ອຫຼີກລ້ຽງຜົນກະທົບ, ຫຼື ຖ້າບັນດາມາດຕະການດັ່ງກ່າວໃຊ້ບໍ່ໃດ້, ການກຳນົດມາດຕະການ ເພື່ອຫຼຸດຜ່ອນ, ຫຼີກລ້ຽງ, ຫຼື ທົດແທນ ຕໍ່ກັບຜົນກະທົບ, ແລະ ໝັ້ນໃຈ ວ່າກຸ່ມຊົນເຜົ່າ ໃດ້ຮັບຜົນປະໂຫຍດທີ່ເໝາະສົມພາຍໃຕ້ໂຄງການຍ່ອຍ.

## 5.3 ການປຶກສາຫາລືແບບອິດສະຫຼະ, ກ່ອນ ແລະ ໄດ້ຮັບຂໍ້ມູນ

ນະໂຍບາຍດ້ານຊົນເຜົ່າຂອງທະນາຄານໂລກ ຕໍ່ກັບໂຄງການຍ່ອຍທີ່ທະນາຄານໂລກໄດ້ໃຫ້ທຶນ ຄືຕ້ອງມີຂັ້ນຕອນການປຶກສາຫາລືແບບອິດສະຫຼະ, ກ່ອນ ແລະ ໄດ້ຮັບຂໍ້ມູນ ໃນການນໍາທາງເປີດກວ້າງການປະກອບສ່ວນດ້ານຜົນປະໂຫຍດຂອງຊຸມຊົນ ຫຼື ປະຊາຊົນຜູ້ທີ່ຖືກຜົນກະທົບ. ຜູ້ກູ້ຢືມທຶນຈະຕ້ອງໄດ້ນໍາໃຊ້ວິທີການ ການປຶກສາຫາລື ທີ່ແທດເໝາະກັບສັງຄົມ ແລະ ວັດທະນະທໍາຂອງກຸ່ມຊົນເຜົ່າ ທີ່ໄດ້ຮັບຜົນກະທົບ ແລະ ອີງຕາມເງື່ອນໄຂຂອງທ້ອງຖິ່ນ, ການອອກແບບວິທີການ, ໃຫ້ຄວາມໃສ່ໃຈເປັນພິເສດກັບຄວາມກັງວົນຂອງແມ່ຍິງຊົນເຜົ່າ, ໄວໜຸ່ມ ແລະ ເດັກນ້ອຍ ແລະ ການເຂົ້າເຖິງໂອກາດດ້ານການພັດທະນາ ແລະ ຜົນປະໂຫຍດຂອງ ກຸ່ມຊົນເຜົ່າ.

ຕາມປົກກະຕິແລ້ວ ເວທີສໍາຫຼັບການສົນທະນາປຶກສາຫາລື ແມ່ນພາກສ່ວນທີ່ມີຢູ່ໃນການປະເມີນຜົນກະທົບທາງສັງຄົມ ແລະ ຂອບເຂດຂອງການປຶກສາຫາລືທີ່ຈະຕ້ອງໄດ້ຍົກຂຶ້ນມາ ແມ່ນຂຶ້ນກັບຄວາມແຕກຕ່າງຂອງພື້ນທີ່ໂຄງການ ແລະ ຮູບແບບຂອງຜົນກະທົບ. ວິທີການທີ່ນໍາໃຊ້ແມ່ນຂຶ້ນກັບຮູບແບບຂອງຜົນກະທົບຈາກໂຄງການທີ່ມີຕໍ່ຊຸມຊົນ (ຕົວຢ່າງ: ຄວາມອ່ອນໄຫວ (ຄວາມດ້ອຍໂອກາດ), ພາສາ ແລະ ການສື່ສານພົວພັນຮ່ວມກັບສັງຄົມໃຫຍ່ ຫຼື ຊຸມຊົນໃກ້ຄຽງ).

ຂັ້ນຕອນການປຶກສາຫາລື ຕ້ອງຮັບປະກັນ:

- ປະຊາຊົນກຸ່ມຊົນເຜົ່າຈະບໍ່ຖືກບີບບັງຄັບ, ກົດດັນ ຫຼື ຂົ່ມຂູ່ ໃນທາງເລືອກການພັດທະນາຂອງເຂົາເຈົ້າ
- ຄວາມຍິນຍອມຂອງກຸ່ມຊົນເຜົ່າ ຈະຕ້ອງມີຢ່າງພຽງພໍກ່ອນການອະນຸມັດ ຫຼື ການເລີ່ມປະຕິບັດກິດຈະກໍາໃດໆ ແລະ ເຄົາລົບຄວາມຕ້ອງການເວລາຂອງຊົນເຜົ່າຕໍ່ກັບຂັ້ນຕອນການປຶກສາຫາລື/ການຍິນຍ
- ປະຊາຊົນກຸ່ມຊົນເຜົ່າຈະຕ້ອງຮັບຮູ້ (ມີ) ຂໍ້ມູນຢ່າງຄົບຖ້ວນກ່ຽວກັບ ຂອບເຂດ ແລະ ຜົນກະທົບຂອງບັນດາກິດຈະກໍາການພັດທະນາຕໍ່ກັບທີ່ດິນ, ຊັບພະຍາກອນຕ່າງໆ ແລະ ຊີວິດການເປັນຢູ່ຂອງເຂົາເຈົ້າ. ຂໍ້ມູນດັ່ງກ່າວປະກອບມີ ລັກສະນະ, ຂະໜາດ, ບາດກ້າວ, ການປີ້ນກັບ ແລະ ຂອບເຂດ ຂອງໂຄງການ ຫຼື ກິດຈະກໍາ; ຈຸດປະສົງ ແລະ ໄລຍະເວລາຂອງໂຄງການ; ທ້ອງຖິ່ນ ແລະ ພື້ນທີ່ ທີ່ຖືກຜົນກະທົບ; ການປະເມີນເບື້ອງຕົ້ນດ້ານເສດຖະກິດ, ສັງຄົມ, ວັດທະນະທໍາ ແລະ ຜົນກະທົບດ້ານສິ່ງແວດລ້ອມ ລວມທັງຄວາມສ່ຽງອື່ນໆ; ບຸກຄະລາກອນທີ່ກ່ຽວຂ້ອງກັບການດໍາເນີນໂຄງການ ແລະ ຂັ້ນຕອນຕ່າງໆຂອງໂຄງການ. ໃນຂະບວນການນີ້ ອາດຈະລວມມີທາງເລືອກຂອງການບໍ່ຍິນຍອມ.

ການປຶກສາຫາລື ແລະ ການມີສ່ວນຮ່ວມ ເປັນພາກສ່ວນ ທີ່ມີຄວາມສໍາຄັນຫຼາຍ ຕໍ່ກັບຂະບວນການຍິນຍອມ ແລະ ຂະບວນການປຶກສາຫາລື ຕ້ອງມີເອກະສານທີ່ເປັນລາຍລັກອັກສອນ. ການປຶກສາຫາລື ຄວນດໍາເນີນການເປັນພາສາທ້ອງຖິ່ນຕ່າງໆທີ່ກ່ຽວຂ້ອງ ເມື່ອເຫັນວ່າຈໍາເປັນ ແລະ ມີເວລາໃນການກະກຽມທີ່ພຽງພໍ (ຢ່າງໜ້ອຍ ສອງອາທິດ) ຈະຕ້ອງຮັບປະກັນວ່າທຸກກຸ່ມຊົນເຜົ່າ ສາມາດເຂົ້າຮ່ວມໃນການປຶກສາຫາລືຢ່າງເຕັມຮູບແບບ ຂອງໂຄງການຍ່ອຍ ແລະ ການກະກຽມກອບການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ.

ການກະກຽມການປຶກສາຫາລື ຕ້ອງພິຈາລະນາໃຫ້ຮອບຄອບ ແລະ ຄວາມເໝາະສົມກັບສະພາບຂອງໂຄງການຍ່ອຍ, ຜົນກະທົບທີ່ຄາດວ່າຈະເກີດຂຶ້ນ ແລະ ສະພາບການຂອງຊຸມຊົນໃນທ້ອງຖິ່ນ. ວິທີການປຶກສາຫາລືອາດລວມມີ:

- ການປະຊຸມກັບຊຸມຊົນ ທັງຈັດຮ່ວມກັນທັງໝົດ ແລະ ຈັດເປັນກຸ່ມຍ່ອຍ;
- ການຈັດກຸ່ມສົນທະນາ ແລະ ການເຂົ້າຮ່ວມການວາງແຜນ;
- ກະຈາຍຂໍ້ມູນຂ່າວສານກ່ຽວກັບຄອງການແບບເຕັມຮູບແບບ (ເອກະສານຂອງໂຄງການ, ບົດລາຍງານການປະເມີນຜົນຕ່າງໆ), ໃນຮູບແບບທີ່ເຂົ້າໃຈງ່າຍ ເຊັ່ນວ່າ ໂພສເຕີ ແລະ ແຜ່ນພັບ ແລະ ສຽງພ້ອມກັບຮູບພາບທີ່ເປັນພາສາທ້ອງຖິ່ນ;
- ກໍານົດຜູ້ປະສານງານຢູ່ພາຍໃນຊຸມຊົນ (ບາງການຝຶກອົບຮົມ ໃຫ້ມີຄວາມເໝາະສົມ ເພື່ອເສີມຂະຫຍາຍຄວາມສາມາດ ເພື່ອການມີສ່ວນຮ່ວມໃນການອະທິບາຍຄວາມໝາຍ ໃຫ້ຈະແຈ້ງໃຫ້ກັບກຸ່ມຊົນເຜົ່າ ໃນຂະບວນການປຶກສາຫາລື);
- ການເຂົ້າຮ່ວມຂອງກຸ່ມຊົນເຜົ່າ ທີ່ຖືກຜົນກະທົບ, ອົງກອນເຜົ່າຊົນກຸ່ມນ້ອຍ (EMOs) ແລະ ອົງກອນສັງຄົມທ້ອງຖິ່ນອື່ນໆ ທີ່ກຸ່ມຊົນເຜົ່າລະບຸວ່າຢາກໃຫ້ມາມີສ່ວນຮ່ວມ;

- ໂອກາດການເຂົ້າຮ່ວມຂອງການປຶກສາຫາລືແຕ່ລະຄັ້ງ ຂອງການກະກຽມ ແລະ ການຈັດຕັ້ງປະຕິບັດໂຄງການ.

ການຈັດຕັ້ງປະຕິບັດການປຶກສາຫາລື ໄດ້ລະບຸໄວ້ໃນ ພາກ 7.0 ຂອງບົດລາຍງານກອບຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ເອກະສານຊ້ອນທ້າຍ A10, A12, ແລະ A13. ມັນລວມມີ ກອງປະຊຸມ ເບື້ອງຕົ້ນ ທີ່ວຽງຈັນ ວັນທີ 9 ເດືອນ ພຶດສະພາ ປີ2016, ກອງປະຊຸມປຶກສາຫາລື ຄັ້ງທໍາອິດ ທີ່ວຽງຈັນ ວັນທີ 20 ເດືອນ ມິຖຸນາ ປີ 2016, ການປຶກສາຫາລືຂັ້ນເມືອງ ແລະ ຊຸມຊົນ ລະຫວ່າງວັນທີ 21 ຫາ 24 ເດືອນ ມິຖຸນາ ປີ 2016 ແລະ ກອງປະຊຸມປຶກສາຫາລື ຄັ້ງທີສອງ ທີ່ວຽງຈັນ ວັນທີ 22 ເດືອນ ກັນຍາ ປີ 2016. ກ່ອນໜ້າ ສອງອາທິດ ຂອງ ແຕ່ລະ ກອງປະຊຸມປຶກສາຫາລື ທັງສອງຄັ້ງ ແມ່ນໄດ້ມີການເຜີຍແຜ່ຂໍ້ມູນກ່ຽວບົດລາຍງານປ້ອງກັນຜົນກະທົບ ທັງເປັນ ພາສາລາວ ແລະ ອັງກິດ ໃນເວບໄຊ້.

## 5.4 ການກະກຽມແຜນພັດທະນາຊົນເຜົ່າ

ອີງຕາມນະໂຍບາຍ OP/BP 4.10 ຂອງທະນາຄານໂລກ, ເມື່ອການຄັດເລືອກລະບຸວ່າກຸ່ມຊົນເຜົ່າທີ່ຈະມີສ່ວນຮ່ວມ, ຜົນຈາກການປະເມີນຜົນກະທົບຕໍ່ສັງຄົມ ແລະ ການປຶກສາຫາລືແບບອິດສະຫຼະ, ກ່ອນ ແລະ ໄດ້ຮັບຂໍ້ມູນ ຈະໄດ້ນໍາໃຊ້ໂດຍກໍານົດໜ່ວຍງານປະຕິບັດການ ເພື່ອກະກຽມແຜນການພັດທະນາກຸ່ມຊົນເຜົ່າ (EGDP) ຂອງກຸ່ມຊົນເຜົ່າທີ່ຖືກຜົນກະທົບຈາກໂຄງການຍ່ອຍໂດຍສະເພາະ. ແຜນການພັດທະນາກຸ່ມຊົນເຜົ່າ (EGDP) ຈະໄດ້ມີການສ້າງມາດຕະການຂຶ້ນມາ ຊຶ່ງຜູ້ກູ້ຢືມທຶນຈະຮັບປະກັນ ຄື: (a) ກຸ່ມຊົນເຜົ່າທີ່ຖືກຜົນກະທົບຈາກໂຄງການ ຈະມີວັດທະນະທໍາ, ຜົນປະໂຫຍດທາງດ້ານເສດຖະກິດ ແລະ ສັງຄົມທີ່ ເໝາະສົມ; (b) ເມື່ອກຸ່ມຊົນເຜົ່າໄດ້ຮັບຜົນກະທົບດ້ານລົບຕາມທີ່ໄດ້ລະບຸໄວ້ນັ້ນ ບັນດາຜົນກະທົບດ້ານລົບເຫຼົ່ານັ້ນຈະຕ້ອງໄດ້ຮັບການປ້ອງກັນ (ຫຼີກເວັ້ນ), ຫຼຸດຜ່ອນ, ບັນເທົາ ຫຼື ໄດ້ຮັບການຊົດເຊີຍ. ແຜນການພັດທະນາກຸ່ມຊົນເຜົ່າ (EGDP) ຄວນໄດ້ຮັບການກະກຽມໃນຮູບແບບທີ່ມີຄວາມຍືດຍຸ່ນ ແລະ ສາມາດປະຕິບັດໃຫ້ເກີດຜົນ ແລະ ລະດັບຄວາມລະອຽດແມ່ນມີຄວາມຫຼາກຫຼາຍຂຶ້ນກັບໂຄງການທີ່ເຈາະຈົງ ແລະ ລັກສະນະຂອງຜົນກະທົບທີ່ຈະຕ້ອງໄດ້ຮັບການແກ້ໄຂ.

ຕ້ອງການຢູ່ຈຸດໃດ, ແຜນການພັດທະນາກຸ່ມຊົນເຜົ່າ ຄວນຈະລວມມີບັນດາອົງປະກອບດັ່ງຕໍ່ໄປນີ້ ດັ່ງທີ່ຕ້ອງການ (ສັດສ່ວນຂອງຂອບເຂດ, ຜົນປະໂຫຍດ, ຜົນກະທົບ ແລະ ຄວາມສ່ຽງຕ່າງໆຂອງໂຄງການຍ່ອຍ):

a) ຄວາມເປັນມາຂອງໂຄງການ ແລະ ບົດສະຫຼຸບບັນຫາຕ່າງໆທີ່ກ່ຽວຂ້ອງກັບກຸ່ມຊົນເຜົ່າ;

b) ບົດສະຫຼຸບກອບທາງດ້ານນິຕິກໍາ ແລະ ອົງກອນ ທີ່ສາມາດນໍາໃຊ້ໄດ້ກັບບັນດາກຸ່ມຊົນເຜົ່າ;

c) ບົດສະຫຼຸບການປະເມີນທາງດ້ານສັງຄົມ ລວມມີທັງຂໍ້ມູນພື້ນຖານດ້ານປະຊາກອນ, ສັງຄົມ, ວັດທະນະທໍາ ແລະ ລັກສະນະດ້ານການເມືອງ ຂອງກຸ່ມຊົນເຜົ່າ ທີ່ຖືກຜົນກະທົບ, ທີ່ດິນ ແລະ ເຂດແດນ ທີ່ພວກເຂົາເປັນເຈົ້າຂອບສືບທອດກັນມາ ຫຼື ນໍາໃຊ້ຕະຫຼອດມາ ຫຼື ຄອບຄອງ ແລະ ຊັບພະຍາກອນທໍາມະຊາດທີ່ພວກເຂົາໄດ້ເພິ່ງພາອາໄສ;

d) ບົດສະຫຼຸບຂອງຜົນການປຶກສາຫາລືແບບອິດສະຫຼະ ກ່ອນ ແລະ ໄດ້ຮັບຂໍ້ມູນ ກັບປະຊາຊົນກຸ່ມຊົນເຜົ່າທີ່ຖືກຜົນກະທົບ ເຊິ່ງນໍາໄປສູ່ການສະໜັບສະໜູນໃນວົງກວ້າງສໍາຫຼັບໂຄງການຍ່ອຍ;

e) ກອບເພື່ອຮັບປະກັນ ການປຶກສາຫາລືແບບອິດສະຫຼະ ກ່ອນ ແລະ ໄດ້ຮັບຂໍ້ມູນ ກັບກຸ່ມຊົນເຜົ່າທີ່ຖືກຜົນກະທົບ ໃນຊ່ວງເວລາການຈັດຕັ້ງປະຕິບັດບັນດາກິດຈະກໍາຂອງໂຄງການຍ່ອຍ;

f) ບັນດາມາດຕະການເພື່ອຮັບປະກັນວ່າປະຊາຊົນກຸ່ມຊົນເຜົ່າໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດ ແລະ ສັງຄົມຕາມທີ່ຄວນຈະໄດ້ຮັບຢ່າງເໝາະສົມ;

g) ຄໍາອະທິບາຍການຈັດຫາບັນດາອົງກອນຕ່າງໆ ເພື່ອການຈັດຕັ້ງປະຕິບັດແຜນການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ;

h) ບັນດາມາດຕະການ ເພື່ອຫຼີກເວັ້ນ, ຫຼຸດຜ່ອນ, ບັນເທົາ ຫຼື ຊົດເຊີຍຕໍ່ກັບຜົນ;

i) ການປະເມີນມູນຄ່າ ແລະ ແຜນການເງິນ ຂອງ ແຜນການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ;

j) ກົນໄກການແກ້ໄຂຄໍາຮ້ອງຮຽນທີ່ສາມາດນໍາໃຊ້ໄດ້ ຕໍ່ກັບ ກຸ່ມຊົນເຜົ່າທີ່ຖືກຜົນກະທົບ

k) ການຈັດຕັ້ງປະຕິບັດ ການຕິດຕາມກວດກາ, ການປະເມີນຜົນ ແລະ ການລາຍງານ ຂອງ ແຜນການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ ພ້ອມກັບບັນດາຕົວຊີ້ວັດ ສໍາລັບການຕິດຕາມກວດກາ ທີ່ສະເພາະເຈາະຈົງ (ແຍກເປັນແຕ່ລະຊົນເຜົ່າ).

# 6.0 ການຈັດຕັ້ງອີງກອນ

ໃນ ສປປ ລາວ, ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT) ມີໜ້າທີ່ຮັບຜິດຊອບໜ້າວຽກດ້ານທະໜົນຫົນທາງ, ການພັດທະນາຕົວເມືອງ, ການຂົນສົ່ງທາງນໍ້າ ແລະ ທາງບົກ ລວມທັງການຄຸ້ມຄອງການສະໜອງນໍ້າໃຊ້ ແລະ ສຸຂະອະນາໄມ ໃນພື້ນທີ່ຕົວເມືອງ. ມັນເປັນຄວາມກ່ຽວຂ້ອງກັບກະຊວງໃຫຍ່ ປະກອບດ້ວຍບັນດາກົມກອງ ແລະ ສະຖາບັນຫຼັກ ຄື ກົມຂົວທາງ , ກົມໂຍທາທິການທາງນໍ້າ, ກົມພັດທະນາຕົວເມືອງ ແລະ ກົມອື່ນໆ. ກົມໂຍທາທິການທາງນໍ້າ ມີໜ້າທີ່ຮັບຜິດຊອບການເຮັດປ້ອງກັນຕາຝັ່ງເຈື່ອນ ແລະ ໄພນໍ້າຖ້ວມ, ທ່າເຮືອ ແລະ ການສັນຈອນ, ການຂົນສົ່ງທາງນໍ້າ, ການກວດກາ ແລະ ໃຫ້ຄໍາແນະນໍາ. ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດຂອງ ສປປ ລາວ ຢູ່ທີ່ເທດສະບານເມືອງໄຊ ແຂວງ ອຸດົມໄຊ ໂຄງການຍ່ອຍການຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມຈະໄດ້ຮັບການດໍາເນີນການໂດຍ ໜ່ວຍງານຄຸ້ມຄອງໂຄງການ (PMU) ແລະ ພະແນກວິຊາການ ເຊິ່ງຈະມີໜ້າທີ່ຮັບຜິດຊອບໃນການວາງແຜນ ແລະ ໃຫ້ຄໍາແນະນໍາ ດ້ານການປະຕິບັດມາດຕະການປ້ອງກັນ ແລະ ຄວາມສອດຄ່ອງຂອງແຕ່ລະໜ້າວຽກທີ່ກ່ຽວຂ້ອງ. ໜ່ວຍງານຄຸ້ມຄອງໂຄງການຂອງກົມໂຍທາທິການທາງນໍ້າ ຈະມີໜ້າທີ່ຮັບຜິດຊອບໃນການສ້າງວິທີການປ້ອງກັນທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຮ່ວມກັນ, ໃຫ້ຄໍາແນະນໍາ ແລະ ຝຶກອົບຮົມດ້ານການປ້ອງກັນ ໃຫ້ແກ ພະນັກງານ ພາຍໃນ ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT).

ໂຄງການຄຸ້ມຄອງຄວາມຊ່ຽງຈາກໄພພິບັດຂອງ ສປປລາວ ຈະໄດ້ຖືກຈັດຕັ້ງປະຕິບັດພາຍໃຕ້ຂະບວນການຂອງລັດຖະບານລາວ. ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT) ຈະເປັນຜູ້ອອກແບບການຈັດຕັ້ງປະຕິບັດ (DIA) ໂດຍຜ່ານ ກົມໂຍທາທິການທາງນໍ້າ. ໂດຍລວມແລ້ວ ການຄຸ້ມຄອງ ແລະ ການປະສານງານ ຈະເປັນຂອບເຂດຄວາມຮັບຜິດຊອບຂອງ ກົມແຜນການ ແລະ ການຮ່ວມມື (DoPC). ກົມໂຍທາທິການທາງນໍ້າ ຈະມີໜ້າທີ່ໃນການວາງແຜນ ແລະ ການດໍາເນີນການບັນດາກິດຈະກໍາຕ່າງໆທີ່ກ່ຽວຂ້ອງ ຂອງການຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມໃນຕົວເມືອງ ພາຍໃຕ້ພາກສ່ວນທີ 1, 2 ແລະ 3 ຂອງ ໂຄງການ ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ຜ່ານໂຄງການຊ່ວຍເຫຼືອ ຄື ໂຄງການ ໄດ້ສ້າງຕັ້ງຂຶ້ນ ເພື່ອຈັດຕັ້ງປະຕິບັດ ແລະ ປະສານງານ ແຜນການຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມໃນຕົວເມືອງໃນລະດັບສູນກາງ ແລະ ທ້ອງຖິ່ນ. ກົມໂຍທາທິການທາງນໍ້າ ຈະເຮັດໜ້າທີ່ ປະສານງານ ແລະ ສະໜອງຂໍ້ມູນດ້ານເຕັກນິກໃຫ້ກັບ ໜ່ວຍງານໂຍທາທິການທາງນໍ້າ ຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ອຸດົມໄຊ ໄດ້ຮັບການມອບໝາຍ ໃນການດໍາເນີນວຽກງານຕ່າງໆ ແລະ ການໃຫ້ຄໍາແນະນໍາ. ໜ່ວຍງານໂຍທາທິການທາງນໍ້າ ຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ອຸດົມໄຊ ຈະສ້າງ ໜ່ວຍງານຈັດຕັ້ງປະຕິບັດໂຄງການ (PIU) ເພື່ອມີໜ້າທີ່ໃນການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ການປ້ອງກັນ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ກົມໂຍທາທິການທາງນໍ້າ ຈະມີໜ້າທີ່ໃນການດໍາເນີນການ ວຽກງານຄວາມປອດໄພຂອງການຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມໃນຕົວເມືອງ ຈະຕ້ອງໄດ້ຮັບການດໍາເນີນການພາຍໃຕ້ ໂຄງການຂອງ ສປປ ລາວ.

ຂຶ້ນກັບການຝຶກອົບຮົມ ແລະ ປະສົບການທີ່ເປັນມືອາຊີບ ໃນດ້ານການຕິດຕາມກວດກາ ແລະ ການດໍາເນີນການປ້ອງກັນສິ່ງແວດລ້ອມ ແລະ ສັງຄົມ, ມີຄວາມເປັນໄປໄດ້ວ່າ ພະນັກງານ ຂອງ ກົມໂຍທາທິການທາງນໍ້າ ແລະ ກົມການຮ່ວມມື ຈະຕ້ອງການການສົ່ງເສີມ ແລະ ການຝຶກອົບຮົມ ເພີ່ມເຕີມ. ພວກເຂົາ ຄວນຈະໄດ້ຮັບການຊ່ວຍເຫຼືອດ້ານເຕັກນິກ ທີມທີ່ຈະຊ່ວຍໃນການດໍາເນີນການ ດ້ານຄວາມຕ້ອງການ ຂອງກອບການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ ລວມທັງການສ້າງຄວາມອາດສາມາດໃຫ້ແກ່ພະນັກງານ ເພື່ອແກ້ໄຂບັນຫາດ້ານການປ້ອງກັນ. ຕາຕະລາງທີ 3 ນໍາສະເໜີໜ້າທີ່ຫຼັກ ຂອງ DIA ແລະ ການປະສານງານໜ້າທີ່ຮັບຜິດຊອບ ຮ່ວກັບລະຖະບານ ຂັ້ນທ້ອງຖິ່ນ ໃນແຕ່ລະຂັ້ນຕອນຕະຫຼອດຊ່ວງອາຍຸຂອງໂຄງການ, ໂດຍສະເພາະ ວຽກງານທີ່ກ່ຽວຂ້ອງກັບກຸ່ມຊົນເຜົ່າ.

ໜ່ວຍງານຄຸ້ມຄອງໂຄງການຂອງກົມໂຍທາທິການທາງນໍ້າ (ພາຍໃຕ້ ກະຊວງ ໂຍທາທິການ ແລະ ຂົນສົ່ງ) ຈະໃຫ້ຄໍາອະທິບາຍແຕ່ລະໜ້າວຽກ ແລະ ໜ້າທີ່ຮັບຜິດຊອບ ທີ່ກ່ຽວຂ້ອງກັບການດໍາເນີນການ ຂອງ ໂຄງການຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມໃນຕົວ ຢູ່ໃນ ເມືອງ ໄຊ, ແຂວງ ອຸດົມໄຊ. ກົມໂຍທາທິການທາງນໍ້າ ຈະທົບທວນຄືນການຄັດເລືອກບົດລາຍງານ ທີ່ໄດ້ກະກຽມໂດຍ ໜ່ວຍງານໂຍທາທິການທາງນໍ້າ ຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ອຸດົມໄຊ ແລະ ກະກຽມຮ່າງເງື່ອນໄຂຕ່າງໆໃນການອ້າງອີງ ຂອງແຜນການຄຸ້ມຄອງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ຄວາມຕ້ອງການດ້ານຕ່າງໆ ເພື່ອການກະກຽມແຜນການຈັດສັນຍົກຍ້າຍໂດຍຫຍໍ້ (ARAP), ຖ້ານໍາໃຊ້, ແລະ ແຜນພັດທະນາກຸ່ມຊົນເຜົ່າ (EGDP), ຕາມຄວາມຈໍາເປັນ. ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ແລະ ເອກະສານແຜນການຕ່າງໆ (ເຊັ່ນ ARAP ແລະ EGDP) ຈະໄດ້ຢາຍໃ ຫ້ກັບຜູ້ທີ່ມີສ່ວນໄດ້ສ່ວນເສຍ ໃນຊ່ວງເວລາການປຶກສາຫາລື. ບັນຫາຕ່າງໆ ແລະ ການສັງເກດເຫັນຈາກການປຶກສາຫາລື ຈະໄດ້ຮັບການບັນທຶກ. ເອກະສານ ຈະມີສ່ວນພົວພັນເຖິງການເຜີຍແຜ່ສູ່ສາທາລະນະຊົນ ແລະ ຍື່ນໃຫ້ກັບທະນາຄານໂລກເພື່ອການກວດກາຄືນ.

ອົງປະກອບການຄຸ້ມຄອງໂຄງການ (ອົງປະກອບ ທີ3) ຂອງ ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ສຳຫຼັບ ສປປ ລາວ ຈະສະໜັບສະໜູນ ການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດ ຂອງໂຄງການຍ່ອຍ, ກວມເອົາການອຳນວຍຄວາມສະດວກໃຫ້ ໂຄງຮ່າງຈັດຕັ້ງ ແລະ ການພັດທະນາຄວາມສາມາດໃນການຄຸ້ມຄອງໂຄງການ, ການປະສານງານ, ວິຊາການ ແລະ ບັນດາມາດຕະການປ້ອງກັນ, ລວມມີການຈັດຕັ້ງປະຕິບັດ ກອບການຄຸ້ມຄອງຊົນເຜົ່າ ແລະ ມາດຕະການຕ່າງໆລວມຢູ່ໃນ ແຜນພັດທະນາກຸ່ມຊົນເຜົ່າ, ການຕິດຕາມ ແລະ ການປະເມີນຜົນ, ແລະ ການລາຍງານ. ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດ ກອບຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ ຈະລວມມີ ການພັດທະນາ ເຄື່ອງມືປ້ອງກັນສະເພາະເຂດ, ລວມມີຄ່າໃຊ້ຈ່າຍຂອງພະນັກງານ, ເດີນທາງ, ກອງປະຊຸມປຶກສາຫາລື, ການແປພາສາ ແລະ ການຝຶກອົບຮົມ. ຄ່າໃຊ້ຈ່າຍທັງໝົດທີປະເມີນໂດຍ ທະນາຄານໂລກ ແລະ ກົມໂຍທາທິການທາງນ້ຳ ແມ່ນປະມານ 205,000 ໂດລາເມລິກາ (ເບິ່ງໃນຫົວຂໍ້ 9.4 ຂອງບົດກອບຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ) ເຊິ່ງຈະໄດ້ຮັບການສະໜັບສະໜູນໂດຍການລວມກັນຂອງ ສະມາຄົມພັດທະນາລະຫວ່າງປະເທດ ແລະ ການຈັດຫາແຫຼ່ງທຶນ ຈາກອົງປະກອບຄຸ້ມຄອງໂຄງການ.

**ຕາຕະລາງ 3 ໜ້າທີ່ຮັບຜິດຊອບຫຼັກ ສຳຫຼັບ ການຈັດຕັ້ງປະຕິບັດ ກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ.**

| ວົງຈອນຂອງ ໂຄງການຍ່ອຍ | ກະຊວງໂຍທາທິການ ແລະ ຂົນສົ່ງ / ກົມໂຍທາທິການ ທາງນ້ຳ | ຍທຂ ແຂວງອຸດົມໄຊ,ໜ່ວງານໂຍທາທິການທາງນ້ຳ (ຕາມ ເຈົ້າຂອງໂຄງການຍ່ອຍ) |
|---|---|---|
| ການກັ່ນຕອງ | ແນະນຳບັນດາຜູ້ສະໝັກ ແລະ ຜູ້ທີ່ມີສ່ວນໄດ້ສ່ວນເສຍ ກ່ຽວກັບວິທີການປ້ອງກັນດ້ານສິ່ງແວດລ້ອມ ແລະ ສັງຄົມ.<br>ທົບທວນທັດສະນະ/ແນວຄວາມຄິດ ແລະ ກັ່ນຕອງການປ້ອງກັນບັນຫາຕ່າງໆທີ່ອາດເກີດຂຶ້ນ ແລະ ແນະນຳບັນດາຜູ້ສະໝັກ ທີ່ກ່ຽວຂ້ອງກັບລັກສະນະ ແລະ ເນື້ອຫາ ຂອງເອກະສານການປ້ອງກັນ ແລະ ມາດຕະຖານຕ່າງໆ ເພື່ອໄດ້ຮັບການກະກຽມ. | ປະເມີນການປ້ອງກັນບັນຫາທີ່ອາດຈະເກີດຂຶ້ນ ກ່ອນຂະບວນການກະກຽມ ລວມມີການກັ່ນຕອງບັນດາກຸ່ມຊົນເຜົ່າ.<br>ອະທິບາຍການປ້ອງກັນບັນຫາທີ່ອາດຈະເກີດຂຶ້ນ ໃນແບບການກັ່ນຕອງການປ້ອງກັນ ຈະຕ້ອງແນບມາພ້ອມກັບບົດສະເໜີຂອງໂຄງການຍ່ອຍ. |
| ການກະກຽມ | ແນະນຳບັນດາຜູ້ສະໝັກ ໃນດ້ານການປ້ອງກັນບັນຫາຕ່າງໆ ດັ່ງທີ່ຕ້ອງການ. | ກະກຽມການປ້ອງກັນດັ່ງທີ່ຕ້ອງການ ເຊັ່ນວ່າ ການປຶກສາຫາລືກັບຊຸມຊົນ ແລະ/ຫຼື ການເກັບກຳຂໍ້ມູນ.<br>ອອກແບບມາດຕະການປ້ອງກັນ ແລະ ກະກຽມເອກະສານ ເຊັ່ນວ່າ ESMP, RAP, EGDP, ECoP, ແລະ ອື່ນໆ ດັ່ງທີ່ໄດ້ຕົກລົງກັນກັບ DOW. ຖ້າຫາກເໝາະສົມ ເປີດເຜີຍຮ່າງເອກະສານການປ້ອງກັນ ພ້ອມກັບ ບົດສະເໜີໂຄງການຍ່ອຍ ຕໍ່ກັບບັນດາຊຸມຊົນທີ່ຖືກຜົນກະທົບກ່ອນກະຊວງໂຍທາທິການ ແລະ ຂົນສົ່ງ/ກົມໂຍທາທິການທາງນ້ຳ (MPWT/DOW) ຈະທົບທວນບົດສະເໜີເປັນຄັ້ງສຸດທ້າຍ. |
| ການທົບທວນຄືນ ແລະ ການຮັບຮອງ | ທົບທວນບົດສະເໜີການປ້ອງກັນຜົນກະທົບ ແລະ ຄວາມສ່ຽງດ້ານສັງຄົມຂອງບັນດາໂຄງການຍ່ອຍ.<br>ປະເມີນຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຂອງຂະບວນການປະເມີນການປ້ອງກັນ ແລະ ການປຶກສາຫາລື. ຮຽກຮ້ອງໃຫ້ມີຂັ້ນຕອນອື່ນອີກ ຖ້າເຫັນວ່າມີຄວາມຈຳເປັນ.<br>ປະເມີນຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຂອງເອກະສານ ແລະ ມາດຕະການປ້ອງກັນ. ຖ້າເຫັນວ່າມີຄວາມຈຳເປັນ, ຮຽກຮ້ອງໃຫ້ມີການດັດແກ້ໃຫ້ ເໝ | ຍື່ນບົດສະເໜີໂຄງການຍ່ອຍ ພ້ອມກັບເອກະສານ ແລະ ມາດຕະການປ້ອງກັນ ຕາມທີ່ໄດ້ຕົກລົງໄວ້. ຖ້າຫາກ ກົມໂຍທາທິການທາງນ້ຳ ຮຽກຮ້ອງ ໃຫ້ດຳເນີນຂັ້ນຕອນເພີ່ມເຕີມ ເພື່ອໃຫ້ຕົງກັບ ກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ແລະ ການສະໜອງນະໂຍບາຍປ້ອງກັນ. ຍື່ນບົດສະເໜີອີກຄັ້ງ ພ້ອມກັບເອກະສານ ແລະ ມາດຕະການປ້ອງກັນສະບັບປັບປຸງດັ່ງທີ່ຕ້ອງການ. ກົດໝາຍ ແລະ ກົດລະບຽບ ແຫ່ງຊາດ ແລະ ທ້ອງຖິ່ນ ທຸກສະບັບ ຈະໄດ້ຮັບການລວບລວມ ແລະ ພິຈາລະນານຳໃຊ້. |

| | | |
|---|---|---|
| | າະສົມ ແລະ ປະເມີນຄືນໃໝ່ກ່ອນການຮັບຮອງຄັ້ງສຸດທ້າຍ.<br><br>ຖ້າຫາກກຸ່ມຊົນເຜົ່າ (ທຽບກັບ OP/BP4.10 ຂອງທະນາຄານໂລກ) ໄດ້ຮັບຜົນກະທົບ, ຕ້ອງໃຫ້ພວກເຂົາມີຄວາມເປັນອິດສະຫຼະ ກ່ອນ ແລະ ການຮັບຮອງການຍິນຍອມ ໃຫ້ບັນດາກິດຈະກຳຂອງໂຄງການຍ່ອຍມີຜົນຕໍ່ກັບເຂົາເຈົ້າ.<br><br>ຖ້າເຫັນວ່າມີຄວາມຈຳເປັນ, ການເຜີຍແຜ່ຂໍ້ມູນການປ້ອງກັນສູ່ສາທາລະນະຊົນ ຢູ່ໃນ website ພາຍຫຼັງການອະນຸມັດໂຄງການ. | ກະກຽມແຜນງານດັ່ງທີ່ຕ້ອງການ ຖ້າຫາກວ່າໂຄງການຍ່ອຍອາດຈະສົ່ງຜົນກະທົບຕໍ່ອົງກອນຊຸມຊົນໃນທ້ອງຖິ່ນ (ອົງການທີ່ບໍ່ຫວັງຜົນກຳໄລ ແລະ ອົງກອນຊຸມຊົນຕ່າງໆ[CBOs]). |

ຕາຕະລາງ 3 (ຕໍ່)

| ວົງຈອນຂອງໂຄງການຍ່ອຍ | ກະຊວງໂຍທາທິການ ແລະ ຂົນສົ່ງ / ກົມໂຍທາທິການທາງນໍ້າ | ຍທຂ ແຂວງອຸດົມໄຊ,ໜ່ວຍງານໂຍທາທິການທາງນໍ້າ (ຕາມ ເຈົ້າຂອງໂຄງການຍ່ອຍ) |
|---|---|---|
| ການຈັດຕັ້ງປະຕິບັດ | ໃຫ້ຄໍາປຶກສາ ແລະ ທົບທວນເອກະສານປ້ອງກັນ ແລະ ບັນຫາຕ່າງໆ ຊ່ວງເວລາການຈັດຕັ້ງປະຕິບັດໂຄງການຍ່ອຍ. ຮຽກຮ້ອງໃຫ້ມີການດັດແກ້ມາດຕະການປ້ອງກັນ ຖ້າຫາກເຫັນວ່າຈໍາເປັນ.<br>ທົບທວນ ແລະ ອະນຸມັດແຜນດໍາເນີນງານ ທີ່ຈະຕ້ອງໄດ້ກະກຽມໃນຊ່ວງເວລາການຈັດຕັ້ງປະຕິບັດໂຄງການຍ່ອຍ. | ເຜີຍແຜ່ເອກະສານການປ້ອງກັນສະບັບສຸດທ້າຍ ມີຜົນກະທົບແນວໃດແດ່ຕໍ່ກັບຊຸມຊົນ.<br>ການຕິດຕາມກວດກາ ແລະ ເອກະສານ ໃນການຈັດຕັ້ງປະຕິບັດ ຂອງບັນດາມາດຕະການປ້ອງກັນ.<br>ເມື່ອກຸ່ມຊົນເຜົ່າ (ທຽບກັບ OP/BP4.10 ຂອງທະນາຄານໂລກ) ໄດ້ຮັບຜົນກະທົບ ລວມທັງການມີສ່ວນຮ່ວມໃນການຕິດຕາມກວດກາ ແລະ ການປະເມີນຜົນ. |
| ການປະເມີນຜົນ | ຮັບປະກັນການລວບລວມ ແລະ ການທົບທວນ ການປ້ອງກັນບັນຫາສິ່ງແວດລ້ອມ ແລະ ສັງຄົມ ແລະ ຜົນທີ່ໄດ້ຮັບຢູ່ໃນຊ່ວງເຄິ່ງກາງ ແລະ ຊ່ວງສຸດທ້າຍ ຂອງການປະເມີນຜົນ ແລະ ການລາຍງານ ລວມມີບົດຮຽນທີ່ສາມາດຖອດຖອນໄດ້ຫຼາຍໆກໍລະນີທີ່ກ່ຽວຂ້ອງ ໃນດ້ານຄວາມຍືນຍົງຂອງແຕ່ລະໂຄງການຍ່ອຍ. | ປະເມີນຄ່າການຈັດຕັ້ງປະຕິບັດ ແລະ ຜົນໄດ້ຮັບຂອງມາດຕະການປ້ອງກັນ.<br>ເມື່ອກຸ່ມຊົນເຜົ່າ (ທຽບກັບ OP/BP4.10 ຂອງທະນາຄານໂລກ) ໄດ້ຮັບຜົນກະທົບ ລວມທັງການມີສ່ວນຮ່ວມໃນການຕິດຕາມກວດກາ ແລະ ການປະເມີນຜົນ. |

# 7.0 ການຕິດຕາມກວດກາ ແລະ ປະເມີນຜົນ

ການຕິດຕາມກວດກາ ແມ່ນພາກສ່ວນຫຼັກຂອງ ກອບການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ ໃນຊ່ວງເວລາການຈັດຕັ້ງປະຕິບັດໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດຂອງ ສປປ ລາວ. ບົດລາຍງານ ການຕິດຕາມກວດກາ ປະຈໍາເດືອນ, ໄຕມາດ-ແລະທຸກໆເຄິ່ງປີຈະໄດ້ຮັບການດໍາເນີນການ ເປັນແຕ່ລະກິດຈະກໍາທີ່ໄດ້ລະບຸສະເພາະ ເພື່ອ:

- ປັບປຸງການຈັດຕັ້ງປະຕິບັດໃນການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ;
- ຮັບປະກັນທັງດ້ານຄຸນນະພາບ ແລະ ປະສິດທິພາບ ຂອງຂະບວນການປະເມີນດ້ານສິ່ງແວດລ້ອມ ແລະ ສັງຄົມ;
- ສ້າງ ພະຍານຫຼັກຖານ ແລະ ປະສິດທິພາບ ບົນພື້ນຖານການປະເມີນດ້ານສິ່ງແວດລ້ອມ ແລະ ສັງຄົມ ເພື່ອໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດຂອງ ສປປ ລາວ;
- ໃຫ້ໂອກາດໃນການລາຍງານຜົນ ຂອງການຈັດຕັ້ງປະຕິບັດ ບັນດາເຄື່ອງມືປ້ອງກັນຜົນກະທົບ ແລະ ມາດຕະການຫຼຸດຜ່ອນ.

ສ່ວນທີ່ກ່ຽວກັບການສະເໜີການຈັດຕັ້ງປະຕິບັດຂອງໂຄງການຍ່ອຍ, ກົມໂຍທາທິການທາງນໍ້າ ໜ່ວຍງານຄຸ້ມຄອງໂຄງການຈະດໍາເນີນການຕິດຕາມກວດກາບັນດາກິດຈະກໍາ ໃນຊ່ວງເວລາ ການສຶກສາຄວາມເປັນໄປໄດ້ ແລະ ESMPs/EGDP/ARAP/RAP ເພື່ອກໍານົດຂອບເຂດ ເພື່ອໃຫ້ມາດຕະການຫຼຸດຜ່ອນ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ປະສົບຜົນສໍາເລັດ. ການຕິດຕາມກວດກາຈະເນັ້ນໃສ່ ສາມ ດ້ານຫຼັກ, ລວມມີ:

**(i) ການຕິດຕາມກວດກາຄວາມສອດຄ່ອງຂອງການປະຕິບັດງານ:** ເພື່ອກວດສອບວ່າ ມາດຕະການຫຼຸດຜ່ອນຜົນກະທົບ ໄດ້ມີການພິຈາລະນາ ແລະ ຈັດຕັ້ງປະຕິບັດ. ໃນຊ່ວງໄລຍະການກະກຽມໂຄງການຍ່ອຍ, ບັນດາວຽກງານຕິດຕາມ ຈະສູມໃສ່ການຮັບປະກັນ ປະສິດທິພາບຂອງ ການປະຕິບັດ ກອບຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ປະຕິບັດຕາມຂະບວນການ. ກົມໂຍທາທິການທາງນໍ້າ ໜ່ວຍງານຄຸ້ມຄອງໂຄງການ ພະນັກງານຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ ຈະຮັບປະກັນການສຶກສາໂຄງການຍ່ອຍ ດໍາເນີນໄປຢ່າງຖືກຕ້ອງ ແລະ ວ່ອງໄວ ໂດຍປະຕິບັດຕາມກົດໝາຍ ຂອງ ລັດຖະບານລາວ ແລະ ນະໂຍບາຍຂອງ ທະນາຄານໂລກ.

ບັນດາການສຶກສາຄວາມເປັນໄປໄດ້ ຈະລວມເຖິງ ການປະເມີນຜົນ ເງື່ອນໄຂໃນການຈັດຕັ້ງປະຕິບັດ ແຜນດຳເນີນງານໃນການຈັດສັນຍົກຍ້າຍ ໂດຍຫຍໍ້ ແລະ ກດຈະກຳທີ່ກ່ຽວຂ້ອງ ກັບແຜນພັດທະນາກຸ່ມຊົນເຜົ່າ;

- ບັນດາຄຳຮ້ອງທຸກ, ໂດຍສະເພາະຜູ້ທີ່ຍັງບໍ່ທັນໄດ້ຮັບການແກ້ໄຂບັນຫາໃນລະດັບທ້ອງຖິ່ນ ແລະ ອາດຕ້ອງມີການແກ້ໄຂໃນລະດັບທີ່ສູງກວ່າດັ່ງທີ່ກຳນົດໃນກອບຄຸ້ມຄອງທາງສິ່ງແວດລ້ອມ ແລະ ສັງຄົມ;
- ການເຮັດເອກະສານໂຄງການສົມບູນວ່າດ້ວຍການຈັດສັນຍົກຍ້າຍ ແລະ ທົດແທນຄ່າເສຍຫາຍ ຖ້າສິ່ງເຫຼົ່ານີ້ມີການນຳໃຊ້, ລວມມີ ການສູນເສຍຊົ່ວຄາວ ແລະ ຖາວອນ;
- ການປະເມີນຄຸນນະພາບວຽກງານການທົດແທນຄ່າເສຍຫາຍ ຫຼື ມາດຕະການຫຼຸດຜ່ອນຜົນກະທົບອື່ນໆທີ່ກ່ຽວຂ້ອງນັ້ນຄວນຖືກນຳໃຊ້ຕາມຄວາມຕ້ອງຂອງໂຄງການລົງທຶນໃນອານາຄົດທີ່ຖືກກຳນົດໄວ້ເບື້ອງຕົ້ນ, ເຊິ່ງລວມເຖິງຜົນກະທົບຕໍ່ວິຖີຊີວິດ; ແລະ
- ມາດຕະການຫຼຸດຜ່ອນຜົນກະທົບໃນເວລາມີການປ່ຽນແປງຫຼາຍ ໃນຕົວວັດແທກທີ່ອາດຕ້ອງການແຜນການແຊກແຊງ, ເຊັ່ນ, ຖ້າປະຊາຊົນກຸ່ມຕ່າງໆ (ຄົນຊົນເຜົ່າ ແລະ ກຸ່ມຄົນທີ່ມີຄວາມອ່ອນໄຫວ - ຜູ້ຍິງ ແລະ ເດັກນ້ອຍ ຍິງ/ຊາຍ, ຜູ້ອາວຸໂສ ແລະ ຜູ້ເສຍອົງຄະ, ຜູ້ບໍ່ມີທີ່ຢູ່ໄສ, ແລະ ຜູ້ທຸກຍາກ, ອື່ນໆ) ບໍ່ໄດ້ຮັບການຊ່ວຍເຫຼືອຢ່າງພຽງພໍຈາກໂຄງການຍ່ອຍທີ່ມີທ່າແຮງ.

ໃນໄລຍະການຈັດຕັ້ງປະຕິບັດ, ການປະຕິບັດການຕິດຕາມຄວນກວມເອົາການກວດສອບລະຫວ່າງ ການກໍ່ສ້າງໂຄງການຍ່ອຍເພື່ອກວດສອບວ່າເງື່ອນໄຂໃດທີ່ມີການອອກ ແລະ ປະຕິບັດຕາມສັນຍາອະນຸຍາດ. ໂຄງການກໍ່ສ້າງທີ່ມີປະສິດທິພາບ, ການເຄື່ອນໄຫວ ແລະ ໄລຍະຮື້ຖອນ ຈະເປັນຄວາມຜິດຊອບຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ການປະຕິບັດການຕິດຕາມກວດສອບໂດຍກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**(ii) ການຕິດຕາມກວດກາຜົນກະທົບ:** ເມື່ອໂຄງການຢູ່ໃນລະຫວ່າງຂັ້ນຕອນການຈັດຕັ້ງປະຕິບັດ, ການຕິດຕາມມາດຕະການຫຼຸດຜ່ອນຜົນກະທົບຂອງໂຄງການຍ່ອຍຄວນເປັນໜ້າທີ່ຂອງ ໜ່ວຍງານການອອກແບບຈັດຕັ້ງປະຕິບັດ. ມີການຄາດການໄວ້ວ່າເອກະສານປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຈະຖືກມອບໃຫ້ຜູ້ຮັບເໝົາ ແລະ ໜ່ວຍງານການອອກແບບຈັດຕັ້ງປະຕິບັດ ເພື່ອຈະຕິດຕາມກວດກາຮັບປະກັນວຽກງານດຳເນີນໄປຕາມຂັ້ນຕອນທີ່ໄດ້ຕົກລົງກັນແລ້ວວ່າດ້ວຍບັນດາມາດຕະການຫຼຸດຜ່ອນຜົນກະທົບ (ລະຫວ່າງ ລັດຖະບານລາວ ແລະ ທະນາຄານໂລກ).

ການຕິດຕາມ ແລະ ການປະເມີນຜົນ ຂອງຜົນກະທົບທາງສັງຄົມ ຈະວັດແທກ ດັ່ງຕໍ່ໄປນີ້:

- ຜົນກະທົບເຖິງບຸກຄົນ, ຄົວເຮືອນ ແລະ ຊຸມຊົນ ຈະໄດ້ມີການຮັກສາລະດັບມາດຕະຖານການດຳລົງຊີວິດ ກ່ອນຊ່ວງໂຄງການ, ຫຼືດີກວ່າເກົ່າ;
- ຜົນກະທົບທີ່ແຕກຕ່າງກັນທາງເພດ ທີ່ຄວນຫຼີກລ້ຽງ, ຫຼຸດ ຫຼື ແກ້ໄຂ;
- ການປັບປຸງຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການຢ່າງໜ້ອຍໃຫ້ເທົ່າຊ່ວງໄລຍະກ່ອນໂຄງການ; ແລະ
- ການຈັດການຂໍ້ຂ້ອງໃຈ ຫຼື ຂັດແຍ່ງ.

ເພື່ອທີ່ຈະວັດແທກຜົນກະທົບເຫຼົ່ານີ້, ກ່ອນການສຶກສາຄວາມເປັນໄປໄດ້ ຈະຕ້ອງລະບຸ:

- ໂຕຊີ້ວັດສະເພາະທີ່ຈະຖືກກວດສອບໂດຍໃຊ້ຂໍ້ມູນແຍກຕາມເພດ;
- ກຳນົດວິທີວັດແທກໂຕຊີ້ວັດ ເປັນປະຈຳ; ແລະ
- ກຳນົດການຕິດຕາມບັນດາເຫດການຫຼັກ(ຕົວຢ່າງ: ຊ່ວງເຄິ່ງກາງ ຂອງຂະບວນການແຜນດຳເນີນງານໃນການຈັດສັນຍົກຍ້າຍ ໂດຍຫຍໍ້, ຖ້ານຳໃຊ້)

**(iii) ການຕິດຕາມກວດກາຜົນກະທົບສະສົມ:** ຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ຈາກໂຄງການຍ່ອຍ ທີ່ແຂວງອຸດົມໄຊຈະຖືກຕິດຕາມກວດກາເພື່ອພິຈາລະນາຄວາມຄືບໜ້າອື່ນໆທີ່ອາດມີຂຶ້ນ.

ເພື່ອໃຫ້ໝັ້ນໃຈວ່າຊັບສິນທາງປັນຍາມີສ່ວນຮ່ວມໃນຂະບວນການຕິດຕາມ ແລະ ປະເມີນຜົນ, ກຸ່ມຜູ້ຕິດຕາມຈະຖືກຈັດຕັ້ງຂຶ້ນພາຍໃນກຸ່ມຊົນເຜົ່າທີ່ຖືກຜົນກະທົບ. ອີງປະກອບຂອງກຳມະການຊຸດນີ້ ຈະຂຶ້ນກັບການປຶກສາຫາລືແບບອິດສະຫຼະ, ກ່ອນ ແລະ ໄດ້ຮັບຂໍ້ມູນ ແລະ ຈະສ້າງໜ່ວຍງານໂຄງຮ່າງຕັດສິນຂອງຊຸມຊົນກຸ່ມຊົນເຜົ່າ, ຕະຫຼອດເຖິງເຖິງຂໍ້ກຳນົດເລື່ອງເພດ ແລະ

ຄວາມສົມດຸນລະຫວ່າງກັນ. ກຸ່ມຕິດຕາມນີ້ ຈະທົບທວນ ບົດລາຍງານຕິດຕາມທາງສັງຄົມ ແລະ ສິ່ງ ແວດລ້ອມທີ່ອະທິບາຍໄວ້.

## 8.0 ກົນໄກການແກ້ໄຂຄຳຮ້ອງຮຽນ

ໃນຖານະທີ່ເປັນໜ່ວຍງານປະຕິບັດການ ຂອງ ກົມໂຍທາທິການທາງນ້ຳ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຈະໄດ້ສ້າງຄະນະກຳມະການແກ້ໄຂຄຳຮ້ອງຮຽນ ຮ່ວມກັບ ຊຸມຊົນກຸ່ມຊົນເຜົ່າທີ່ຖືກຜົນກະທົບ, ແລະ ຂັ້ນ ເມືອງ ຫຼື ຂັ້ນແຂວງ. ຄະນະກຳມະການເຫຼົ່ານີ້ ຈະໄດ້ດຳເນີນການປະເມີນຜົນ ແລະ ອຳນວຍຄວາມສະດວກ ໃນການແກ້ໄຂບັນຫາຂໍ້ຂ້ອງໃຈ ແລະ ການຮ້ອງຮຽນຕ່າງໆ ແລະ ຄວາມຄັບຂ້ອງໃຈ ຂອງກຸ່ມຊົນເຜົ່າ.. ຄະນະກຳມະການແກ້ໄຂຄຳຮ້ອງຮຽນ ຈະປະກອບມີ ຕົວແທນຈາກປະຊາຊົນ ແລະ ຄົວເຮືອນທີ່ຖືກຜົນກະທົບ, ຜູ້ນຳຊຸມຊົນ ແລະ ອົງກອນຈັດຕັ້ງທາງສັງຄົມ ນອກຈາກນັ້ນ ກໍຍັງມີ ຕົວແທນຈາກຂັ້ນບ້ານ ແລະ ຂັ້ນ ເມືອງ ແລະ ເຈົ້າໜ້າທີ່ຈາກ ໜ່ວຍງານຄຸ້ມຄອງໂຄງການ ແລະ ໜ່ວຍງານການດຳເນີນການໂຄງການ. ຄະນະກຳມະການແກ້ໄຂຄຳຮ້ອງຮຽນ ຈະເຮັດໜ້າທີ່ ເພື່ອຜົນປະໂຫຍດຂອງປະຊາຊົນ ແລະ ຄົວເຮືອນທີ່ຖືກຜົນກະທົບຕະຫຼອດໄລຍະເວລາອາຍຸຂອງໂຄງການຍ່ອຍ ລວມທັງໄລຍະເວລາທີ່ບົກຜ່ອງໃນໜ້າທີ່.

ການປຶກສາຫາລືກັບ ສະມາຊິກກຸ່ມຊົນເຜົ່າທີ່ຖືກຜົນກະທົບ ຈະໄດ້ຈັດຂຶ້ນກ່ອນຂະບວນການວາງແຜນຂອງ ໂຄງການ. ກ່ອນການເລີ່ມຕົ້ນໂຄງການຍ່ອຍ, ຜູ້ນຳໝູ່ບ້ານ ຈະໄດ້ເຮັດການສຳຫຼວດທີ່ດິນ ແລະ ຊັບສິນ ຂອງປະຊາຊົນຜູ້ທີ່ຖືກຜົນກະທົບໂດຍທາງກົງ. ຜູ້ນຳໝູ່ບ້ານ ຈະໄດ້ເຮັດການ ການປຶກສາຫາລື ກັບ ປະຊາຊົນຜູ້ທີ່ຖືກຜົນກະທົບແລະ ຂະບວນການທັງໝົດຈະໄດ້ເຮັດເປັນລາຍລັກອັກສອນ.

ທຸກໆການຮ້ອງຮຽນຈະຕ້ອງເປັນລາຍລັກອັກສອນ ຫຼື ການຮ້ອງຮຽນດ້ວຍປາກເປົ່າ ກໍ່ຕ້ອງໄດ້ຮັບການບັນທຶກໃນເວລາ ແລະ ສະຖານທີ່ ຈາກ ສະມາຊິກກຸ່ມຊົນເຜົ່າທີ່ຖືກຜົນກະທົບແລະ ໄດ້ຮັບການບັນທຶກຢ່າງເໝາະສົມ ຈາກ ຄະນະກຳມະການແກ້ໄຂຄຳຮ້ອງຮຽນ ແຕ່ລະຂັ້ນ (ຂຸ່ມ, ເມືອງ, ແຂວງ). ແບບ ຫຼື ຟອມ ມີໄວ້ເພື່ອການບັນທຶກນັ້ນ ສາມາດພັດທະນາ ໃຫ້ສາມາດເຂົ້າໃຈງ່າຍຕໍ່ກັບການບັນທຶກ. ສະມາຊິກກຸ່ມຊົນເຜົ່າທີ່ຖືກຜົນກະທົບຈະບໍ່ໄດ້ເສຍທຸກຄ່າທຳນຽມດ້ານການບໍລິຫານ ແລະ ກົດໝາຍ ໃນຂັ້ນຕອນຂອງການຮ້ອງຮຽນ. ການແກ້ໄຂຄຳຮ້ອງຮຽນ ທີ່ກ່ຽວຂ້ອງກັບທຸກຮູບແບບຂອງການດຳເນີນກິດຈະກຳໂຄງການຍ່ອຍ ຈະໄດ້ຮັບການ ດຳເນີນການໂດຍການເຈລະຈາກັນ ຈົນເກີດມີຄວາມເພິ່ງພໍໃຈທີ່ສຸດ. ຂະບວນການແກ້ໄຂຄຳຮ້ອງຮຽນ ແມ່ນເພື່ອສະໜອງ ການກຳນົດເວລາ ແລະ ກົນໄກຄວາມໂປ່ງໃສ ເພື່ອນຳສະເໜີ ແລະ ແກ້ໄຂ ທຸກໆຄວາມຂ້ອງໃຈຂອງ ສັງຄົມ ແລະ ສິ່ງແວດລ້ອມ ທີ່ກ່ຽວຂ້ອງກັບການດຳເນີນກິດຈະກຳໂຄງການຍ່ອຍ. ຂະບວນການແກ້ໄຂຄຳຮ້ອງຮຽນນີ້ ບໍ່ໄດ້ໝາຍເຖິງຂະບວນການແກ້ໄຂການຮ້ອງຮຽນຂອງລັດຖະບານ ຫຼື ການສະໜອງກົດໝາຍແຫ່ງຊາດ ແຕ່ວ່າເປັນການແກ້ໄຂບັນຫາຄວາມຂ້ອງໃຈຕ່າງໆຂອງສະມາຊິກກຸ່ມຊົນເຜົ່າແລະ ການຮ້ອງຮຽນແບບທັນເວລາ, ເຮັດໃຫ້ພ້ອມສາມາດດຳເນີນການໄດ້ ແລະ ຊຸມຊົນກຸ່ມຊົນເຜົ່າ  ແລະ ຂະໜາດທີ່ແຕກຕ່າງກັບຄວາມສ່ຽງ ແລະ ຜົນກະທົບ ຈາກການດຳເນີນກິດຈະກຳໂຄງການຍ່ອຍ.

ແຜນພັດທະນາກຸ່ມຊົນເຜົ່າ ຈະຖືກສ້າງຂຶ້ນເພື່ອສະມາຊິກ ຂອງຊຸມຊົນກຸ່ມຊົນເຜົ່າທີ່ ຖືກຜົນກະທົບ ນຳມາຍັງການຮ້ອງຮຽນຕ່າງໆ ໃຫ້ເຈົ້າໜ້າທີ່ໂຄງການ ທີ່ກ່ຽວຂ້ອງ ໄດ້ແກ້ໄຂ. ຂະບວນການແກ້ໄຂຄຳຮ້ອງຮຽນ ຈະຕ້ອງມີມາດຕະຖານການປະຕິບັດງານທີ່ເໝາະສົມ, ລວມມີເວລາທີ່ຕ້ອງການໃນການໃຫ້ຄຳຕອບກັບການຮ້ອງຮຽນ ແລະ ບໍ່ມີການເກັບຄ່າທຳນຽມ ຫຼື ຄິດຄ່າໃຊ້ຈ່າຍໃດໆກັບປະຊາຊົນ. ແຜນພັດທະນາກຸ່ມຊົນເຜົ່າ ຄວນຈະກຳນົດ ວິທີທາງອື່ນໆ ໃຫ້ແກ່ຜູ້ເສຍຫາຍ ຖ້າຫາກວ່າຂັ້ນຕອນຕ່າງໆທີ່ກ່ຽວຂ້ອງກັບໂຄງການ ບໍ່ສາມາດທີ່ຈະນຳໃຊ້ໄດ້ຕໍ່ກັບການແກ້ໄຂຄຳຮ້ອງຮຽນຕ່າງໆ.

ກອບການຄຸ້ມຄອງທາງສິ່ງແວດລ້ອມ ແລະ ສັງຄົມ ລວມມີບັນດາລາຍະອຽດ ດ້ານກົນໄກການແກ້ໄຂຄຳຮ້ອງຮຽນ ຂອງໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດຂອງ ສປປ ລາວ. ການຮ້ອງຮຽນຕ່າງໆ ທີ່ກ່ຽວຂ້ອງກັບບັນຫາສິ່ງແວດລ້ອມ ແລະ ສັງຄົມ ຈາກກຸ່ມຊົນເຜົ່າທີ່ຖືກຜົນກະທົບໂດຍທາງກົງ ຫຼື ໂດຍທາງອ້ອມ ຈາກການຈັດຕັ້ງປະຕິບັດກິດຈະກຳໂຄງການຍ່ອຍ ຈະໄດ້ຮັບການແກ້ໄຂໂດຍຄະນະກຳມະການແກ້ໄຂຄຳຮ້ອງຮຽນ (GRC) ໂດຍຜ່ານ ກົນໄກການແກ້ໄຂຄຳຮ້ອງຮຽນ ຂອງໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດຂອງ ສປປ ລາວ ມີຢູ່ໃນແຜນວາດ 1.

ເຖິງຢ່າງໃດກໍ່ຕາມ, ຜູ້ຮ້ອງຮຽນມີສິດໃນການສະເໜີຄຳຮ້ອງຮຽນໂດຍກົງ ຫາຫ້ອງການໜ່ວຍງານດຳເນີນການໂຄງການ ຂອງ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ຫຼື ສະພາແຫ່ງຊາດ. ດັ່ງທີ່ໄດ້ລະບຸໄວ້ ໃນກົດໝາຍຂອງ ສປປ ລາວ. ລາຍລະອຽດຂອງແຕລະຂັ້ນຂອງການຮ້ອງຮຽນ, ການປຶກສາຫາລື ແລະ ຜົນໄດ້ຮັບ ຈະໄດ້ຮັບການບັນທຶກ ແລະ ເກັບເປັນລາຍລັກອັກສອນໄວ້ໃນປຶ້ມບັນທຶກການແກ້ໄຂຄຳຮ້ອງຮຽນ. ສະພາບຂອງການສະເໜີຄຳຮ້ອງຮຽນ ແລະ ການແກ້ໄຂຄຳຮ້ອງຮຽນ ຈະໄດ້ລາຍງານເປັນບົດລາຍງານປະຈຳເດືອນໃຫ້ ໜ່ວຍງານໂຍທາທິການທາງນ້ຳ ຂອງ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ອຸດົມ

ໄຊ. ເພື່ອເປັນການແກ້ໄຂຄຳຮ້ອງຮຽນຕ່າງໆ ຂອງ ປະຊາຊົນ ແລະ ຄົວເຮືອນທີ່ຖືກຜົນກະທົບ ໃຫ້ວ່ອງໄວ ແລະ ມີປະສິດທິພາບ ເຊິ່ງຈະລວມມີຂັ້ນຕອນດັ່ງນີ້:

- <u>ຂັ້ນຕອນທີ 1:</u> ຖ້າຫາກສະມາຊິກຂອງຊຸມຊົນກຸ່ມຊົນເຜົ່າ ບໍ່ເພິ່ງພໍໃຈຕໍ່ກັບແຜນການຍົກຍ້າຍ ຫຼື ການດຳເນີນການ, ເຂົາ ສາມາດຮ້ອງຮຽນເປັນຄຳເວົ້າ ຫຼື ເປັນໜັງສື ຕໍ່ກັບຄະນະກຳມະການແກ້ໄຂຄຳຮ້ອງ ຂັ້ນເມືອງ ຫຼື ຂັ້ນແຂວງ;
- <u>ຂັ້ນຕອນທີ 2:</u> ຖ້າຫາກສະມາຊິກຂອງຊຸມຊົນກຸ່ມຊົນເຜົ່າ ບໍ່ເພິ່ງພໍໃຈຕໍ່ກັບຜົນການແກ້ໄຂຄຳຮ້ອງຮຽນຢູ່ໃນຂັ້ນຕອນທີ 1, ເຂົາເຈົ້າ ສາມາດ ຮ້ອງຮຽນເຖິງ ຕໍ່ກັບຄະນະກຳມະການແກ້ໄຂຄຳຮ້ອງ ຂັ້ນໂຄງການ;
- <u>ຂັ້ນຕອນທີ 3:</u> ຖ້າຫາກເຂົາ ບໍ່ເພິ່ງພໍໃຈຕໍ່ກັບຜົນການແກ້ໄຂຄຳຮ້ອງຮຽນຢູ່ໃນຂັ້ນຕອນທີ 2, ເຂົາ ສາມາດຮ້ອງຮຽນເຖິງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອຕັດສິນພາຍຫຼັງທີ່ໄດ້ຮັບຜົນການປຶກສາຫາລືຈາກ ຄະນະກຳມະການແກ້ໄຂຄຳຮ້ອງ ຂັ້ນໂຄງການ. ຄະນະກຳມະການຕັດສິນ ຄວນຈະດຳເນີນການຕັດສິນ ພາຍໃນເວລາ 20 ວັນ.
- <u>ຂັ້ນຕອນທີ 4:</u> ຖ້າຫາກເຂົາເຈົ້າ ຍັງບໍ່ເພິ່ງພໍໃຈຕໍ່ກັບຜົນການແກ້ໄຂຄຳຮ້ອງຮຽນ ຈາກ ຄະນະກຳມະການແກ້ໄຂຄຳຮ້ອງຮຽນ, ເຂົາເຈົ້າ ສາມາດ ຮ້ອງຟ້ອງ ເຖິງສານໄດ້ ໂດຍອີງຕາມກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ໃນ ສປປ ລາວ.

### ແຜນວາດ 1 ຂະບວນການຮັບ ແລະ ແກ້ໄຂຄຳຮ້ອງ ຂອງປະຊາຊົນ (GRM)




ສະມາຊິກຂອງຊຸມຊົນກຸ່ມຊົນເຜົ່າ ສາມາດຮ້ອງຮຽນ ຫຼື ຮ້ອງຟ້ອງ ໄດ້ໃນທຸກດ້ານຂອງການອອກແບບ ແລະ ການດຳເນີນການຂອງ ໂຄງການ. ຟອມ (ແບບຟອມ) ການຕອບກັບຂອງການຮ້ອງຮຽນ ຈະໄດ້ຮັບການພັດທະນາ ພາຍໃຕ້ ໂຄງການແລະສາມາດນຳໃຊ້ໄດ້ໃນເທດສະບານ ເມືອງ ໄຊ ແຂວງ ອຸດົມໄຊ ແລະ ບໍລິເວນໃກ້ຄຽງ ຈະລວມມີ ສະຖານທີ່ຢູ່ອາໄສຂອງສະມາຊິກຂອງຊຸມຊົນກຸ່ມຊົນເຜົ່າ, ເພື່ອການນຳໃຊ້ເຂົ້າໃນການສະເໜີຄຳຮ້ອງຮຽນຕ່າງໆຂອງ ສະມາຊິກຊຸມຊົນ. ສະມາຊິກຂອງຊຸມຊົນກຸ່ມຊົນເຜົ່າ ຈະໄດ້ຮັບການອະທິບາຍຢ່າງຈະແຈ້ງກ່ຽວກັບຂັ້ນຕອນການສະເໜີຄຳຮ້ອງຮຽນຕ່າງໆ ທີ່ໄດ້ກ່າວມາຂ້າງເທິງນັ້ນ ຈາກການປະຊຸມໃນຂັ້ນບ້ານ ແລະ ຟອມ (ແບບຟອມ) ໃນການຕິດຕໍ່ສື່ສານ. ເທັກໂນໂລຢີຂອງຂໍ້ມູນຂ່າວສານ ແລະ ການສື່ສານແລະ ສື່ມວນຊົນ ຄວນຈະໄດ້ຮັບການນຳໃຊ້ ເພື່ອການເຜີຍແຜ່ຂໍ້ມູນຂ່າວສານ. ທາງເລືອກ ແລະ ຄຳເຫັນຕ່າງໆ ກ່ຽວກັບ ການຈັດສັນຍົກຍ້າຍ ປະຊາຊົນຜູ້ທີ່ມີຄວາມກັງວົນ ແລະ ອົງກອນຕ່າງໆ ໄດ້ນຳສະເໜີໄປນັ້ນ ຄວນຈະໄດ້ຮັບການບັນທຶກເປັນລາຍລັກອັກສອນ ແລະ ໜ່ວຍງານຈັດສັນຍົກຍ້າຍໃນລະດັບຕ່າງໆ ຄວນຈະນຳສະເໜີ ແລະ ແກ້ໄຂບັນຫາໃຫ້ທັນຕາມເວລາ.

ໜ່ວຍງານທີ່ນຳສະເໜີ ແລະ ແກ້ໄຂຄຳຮ້ອງຮຽນຕ່າງໆ ຂອງ ປະຊາຊົນ ແລະ ຄົວເຮືອນທີ່ຖືກຜົນກະທົບ ບໍ່ມີການເກັບຄ່າທຳນຽມ ຫຼື ຄິດຄ່າໃຊ້ຈ່າຍໃດໆກັບປະຊາຊົນ. ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນໃນການຮ້ອງຮຽນ ຈະເປັນຄ່າໃຊ້ຈ່າຍທີ່ບໍ່ໄດ້ກຳນົດໃນແຜນໂດຍອົງກອນຈັດຕັ້ງປະຕິບັດທີ່ກ່ຽວຂ້ອງ.

## 9.0 ການເຜີຍແຜ່ໃຫ້ກັບກຸ່ມຊົນເຜົ່າ ເພື່ອກະກຽມພາຍໃຕ້ກອບການມີສ່ວນຮ່ວມຂອງຊົນເຜົ່າ

OP/BP 4.10 ລະບຸໄວ້ວ່າ ຜູ້ກູ້ຢືມທຶນ ເຜີຍແຜ່ ບົດລາຍງານ ປະເມີນຜົນກະທົບຕໍ່ສັງຄົມ ແລະ ຮ່າງຂອງ ແຜນພັດທະນາກຸ່ມຊົນເຜົ່າ ໃຫ້ກັບ ກຸ່ມຊົນເຜົ່າທີ່ຖືກຜົນກະທົບ ໂດຍຜ່ານ ວິທີການ ແລະ ພື້ນທີ່ ທີ່ເໝາະສົມກັບວັດທະນະທຳ. ໃນກໍລະນີ ແຜນພັດທະນາກຸ່ມຊົນເຜົ່າ, ເອກະສານໄດ້ຮັບການເຜີຍແຜ່ ໂດຍຜ່ານ ອົງກອນເຜົ່າຊົນກຸ່ມນ້ອຍ (EMOs) ໃນລະດັບຊາດ, ລະດັບພາກພື້ນ ຫຼື ລະດັບທ້ອງຖິ່ນ ທີ່ເໝາະສົມ ໃຫ້ກັບແຕ່ລະຊົນເຜົ່າ ຜູ້ທີ່ຄາດວ່າຈະຖືກຜົນກະທົບຈາກໂຄງການ. ໃນພື້ນທີ່ ທີ່ບໍ່ມີອົງກອນເຜົ່າຊົນກຸ່ມນ້ອຍ (EMOs), ເອກະສານ ອາດຈະໄດ້ຮັບການເຜີຍແຜ່ ໂດຍຜ່ານ ອົງກອນທາງສັງຄົມອື່ນໆ ຕາມຄວາມເໝາະສົມ. ໃນລະດັບທ້ອງຖິ່ນ, ບົດປະເມີນຜົນກະທົບດ້ານສງຄົມ ແລະ ຮ່າງແຜນພັດທະນາກຸ່ມຊົນເຜົ່າ ຈະຖືກເຜີຍແຜ່ ແລະແຈກຢາຍ ໃນກອງປະຊຸມສາທະລະນະຊົນ, ອຳນວຍຄວາມສະດວກຕາມສະຖານທີ່ ແລະ ພາສາ, ແລະ ເວລາທີ່ເໝາະສົມ ເຖິງສະມະຊິກ ຂອງກຸ່ມຊຸມຊົນຊົນເຜົ່າທີ່ຖືກຜົນກະທົບ.

ກ່ອນການອະນຸມັດໂຄງການຍ່ອຍ, ຜູ້ກູ້ຢືມທຶນ ຈະຕ້ອງສົ່ງ ບົດລາຍງານ ປະເມີນຜົນກະທົບຕໍ່ສັງຄົມ ແລະ ຮ່າງຂອງ ແຜນພັດທະນາກຸ່ມຊົນເຜົ່າ ໃຫ້ກັບ ທະນາຄານໂລກ ເພື່ອທົບທວນຄືນ. ຖ້າຫາກວ່າທະນາຄານໂລກ ໄດ້ກຳນົດວ່າ ເອກະສານເຫຼົ່ານັ້ນ ສາມາດຮັບໄດ້ ເພື່ອການປະເມີນໂຄງການ, ທະນາຄານ ກໍ່ຈະເຜີຍແຜ່ສູ່ສັງຄົມ ເພື່ອໃຫ້ສອດຄ່ອງກັບນະໂຍບາຍຂອງທະນາຄານໂລກ ໃນການເຂົ້າເຖິງຂໍ້ມູນ ແລະ ຜູ້ກູ້ຢືມທຶນ ກໍ່ເຮັດການເຜີຍແຜ່ສູ່ກຸ່ມຊົນເຜົ່າ ທີ່ຖືກຜົນກະທົບ ຄືກັນກັບຮ່າງເອກະສານຕ່າງໆກ່ອນໜ້ານີ້.

## 10.0 ງົບປະມານ

ງົບປະມານທີ່ຄາດວ່າຈະໃຊ້ໃນການຈັດຕັ້ງປະຕິບັດກອບການຄຸ້ມຄອງຊົນເຜົ່າ ແລະ ໂຄງການຍ່ອຍທີ່ກ່ຽວຂ້ອງ ປະມານ 65,000 ໂດລາອາເມລິກາ (ຕາຕະລາງ 4). ແຫຼ່ງເງິນທຶນແມ່ນມາຈາກອົງປະກອບທີ 4, ການຄຸ້ມຄອງໂຄງການ.

**ຕາຕະລາງ 4 ລາຍການງົບປະມານ ເພື່ອຈັດຕັ້ງປະຕິບັດກອບການຄຸ້ມຄອງຊົນເຜົ່າ ແລະ ບັນດາໂຄງການຍ່ອຍຕ່າງໆທີ່ກ່ຽວຂ້ອງ.**

| ລຳດັບ | ລາຍການ | ລາຄາເບື້ອງຕົ້ນ (USD) |
|---|---|---|
| 1 | ປຶກສາຫາລືຮ່ວມກັບ ກຸ່ມຊົນເຜົ່າ ເພື່ອ ກະກຽມ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນພັດທະນາກຸ່ມຊົນເຜົ່າ | 20,000 |
| 2 | ນຳໃຊ້ບັນດາທີ່ປຶກສາໃນປະເທດ (ບໍ່ເຕັມເວລາ) ເພື່ອກະກຽມແຜນພັດທະນາກຸ່ມຊົນເຜົ່າ ແລະ ຫົວຂໍ້ທີ່ກ່ຽວກັບ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ | 30,000 |
| 3 | ນຳໃຊ້(ຖ້າຈຳເປັນ) ບຸກຄົນທີໄດ້ສອງພາສາເພື່ອອຳນວຍຄວາມສະດວກໃຫ້ກຸ່ມຊົນເຜົ່າ, ຄົວເຮືອນທີ່ຖືກຜົນກະທົບ ໃນຂະບວນການແກ້ໄຂຄຳຮ້ອງຮຽນ | 5,000 |
| 4 | ນຳໃຊ້ທີ່ປຶກສາໃນປະເທດ ເພື່ອປະຕິບັດການປະເມີນຜົນບັນດາແຜນພັດທະນາກຸ່ມຊົນເຜົ່າ | 10,000 |
| | ລວມ | **65,000** |

ໃນເວລານີ້ ບໍ່ສາມາດຄາດຄະເນເພື່ອການກະກຽມຈັດຕັ້ງປະຕິບັດ ແຜນພັດທະນາກຸ່ມຊົນເຜົ່າ, ເນື່ອງຈາກວ່າ ທີ່ຕັ້ງ ທີ່ແນ່ນອນຂອງໂຄງການຍ່ອຍ, ແລະ ບັດາຜົນກະທົບຕໍ່ຊຸມຊົນຊົນເຜົ່າ, ຍັງບໍ່ທັນໄດ້ກຳນົດ. ງົບປະມານເຫຼົ່ານີ້ ຈະຖືກພັດທະນາຂຶ້ນ ໃນຊ່ວງຈັດຕັ້ງປະຕິບັດ, ແລະ ຈະໄດ້ຮັບການສະໜອງທຶນ ຈາກອົງປະກອບທີ4 (ການຄຸ້ມຄອງໂຄງການ).